# ວັດຈະນານຸກົມ

## ປະກອບຮູບ



ໂດຍ ດວງເດືອນ ບຸນຍາວົງ

# ວັດຈະນານຸກົມ

## ປະກອບຮູບ

ເລືອກເຟັ້ນຄຳສັບ ແລະ ຮຽບຮຽງ

ໂດຍ **ດວງເດືອນ ບຸນຍາວົງ**

ອຸປະຖຳໂດຍ

**ສະມາຄົມສົ່ງປຶ້ມໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ**

**A. S. P. B**

# ວັດຈະນານຸກົມປະກອບຮູບ


ໂດຍ : **ດວງເດືອນ ບຸນຍາວົງ**

ແຕ້ມຮູບໂດຍ : **ຫນູພົນ ຫມື່ນອາດອາສາ**

ບັນນາທິການສະເພາະກິດ : **ອຸທິນ ບຸນຍາວົງ**

ພິມຄອມພິວເຕີ : **ຄໍາມັກ ວົງສັກດາ**

: **ມາລີ ທອງທຸມມາ**

ທະບຽນອະນຸຍາດ ເລກທີ : 681/ພທປ 200495

ພິມເທື່ອທີສີ່ ເດືອນສິງຫາ 1998

ຈໍານວນ : 2.500 ຫົວ



© ສະຫງວນລິຂະສິດ ດວງເດືອນ ບຸນຍາວົງ



ພິມທີ່ໂຮງພິມ : ເຂເອັສການພິມ, ວຽງຈັນ ສ.ປ.ປ. ລາວ


ປື້ມຫົວນີ້ ພິມອອກໂດຍການຊ່ວຍເຫລືອຂອງປະຊາຊົນຍີ່ປຸ່ນ ເພື່ອຈຸດປະສົງໃຫ້ເດັກນ້ອຍລາວ ໄດ້ສໍາຜັດກັບເນື້ອໃນທີ່ມ່ວນຊື່ນ ແລະ ເປັນຄວາມຮູ້.

ການອ່ານປື້ມເຮັດໃຫ້ເກີດຈິນຕະນາການອັນກວ້າງຂວາງທີ່ເຕັມໄປດ້ວຍຄວາມຕື່ນເຕັ້ນດີໃຈ ພາໃຫ້ຮູ້ຈັກໂລກຫລາຍແງ່ຫລາຍມຸມ ແລະ ພາໃຫ້ເດັກນ້ອຍເຕີບໃຫຍ່ຂຶ້ນຢ່າງມີຄຸນນະພາບ ແລະ ມີຈິດໃຈສູງສົ່ງໃນອະນາຄົດ.

# ຂໍສະແດງຄວາມຂອບໃຈ

ອົງການສາກົນ ແລະ ບຸກຄົນຕ່າງໆ ທີ່ມີຊື່ຢູ່ລຸ່ມນີ້ ໄດ້ຊ່ວຍສະຫນັບສະຫນູນ ທາງດ້ານເງິນທຶນ, ວິຊາຄວາມຮູ້ ແລະ ຄໍາປຶກສາ ອັນເປັນປະໂຫຍດຍິ່ງ ຈົນປຶ້ມສໍາເລັດເປັນຫົວອອກມາ :

- THE GLOBAL CITIZENS FOUNDATION ( GCF )
- C.L. UNION ( TABATA )
- NODA MIYAKO
- YATSUSHIKO - MINAMI R.C.
- CHIGASAKI HANUMAN
- OOIZUMI AI
- ຊາວຍີ່ປຸ່ນ ຜູ້ຮັກແພງເດັກນ້ອຍລາວ
- ທ່ານ ສົມແສງ ໄຊຍະວົງ
- ທ່ານ ດາຣາ ກັນລະຍາ ( ວີຣະວົງສ໌ )

# ເອກະສານທີ່ໃຊ້ຄົ້ນຄວ້າ


1. ວັດຈະນານຸກົມ ພາສາລາວ ໂດຍ ມະຫາສິລາ ວີຣະວົງສ໌, ກະຊວງສຶກສາ ພິມປີ 1960
2. ວັດຈະນານຸກົມ ພາສາລາວ ໂດຍ ມະຫາສິລາ ວີຣະວົງສ໌, ຕົ້ນສະບັບຮຽບຮຽງໃໝ່ ສຳເລັດປີ 1986 (ຍັງບໍ່ທັນພິມ)
3. ວັດຈະນານຸກົມ ພາສາລາວ ໂດຍ ດຣ. ທອງຄຳ ອ່ອນມະນີສອນ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ 1992,
4. ສາຣານຸກົມ ອີສານ-ໄທ-ອັງກິດ ໂດຍ ດຣ. ປຼີຊາ ພິນທອງ, ສຳນັກພິມສິຣິທຳ, ປະເທດໄທ, 1989
5. ໄວຍາກອນລາວ ໂດຍ ພູມີ ວົງວິຈິດ, ພະແນກສຶກສາສູນກາງ ພິມປີ 1967
6. ຂໍ້ມູນສະຖິຕິ, ສູນສະຖິຕິແຫ່ງລັດ ພິມອອກປີ 1996 ແລະ 1997
7. ປະຫວັດສາດລາວ ໂດຍ ມະຫາສິລາ ວີຣະວົງສ໌, ສະບັບແກ້ໄຂ ແລະ ເພີ່ມເຕີມຂໍ້ມູນ, ແປ ແລະ ພິມເປັນພາສາໄທ ໂດຍ ມະຫາວິທະຍາໄລຊຽງໃໝ່, ປະເທດໄທ, 1992
8. ຊົນເຜົ່າຢູ່ ສ.ປ.ປ. ລາວ ໂດຍ ສະຖາບັນຊົນເຜົ່າ, ວຽງຈັນ, 1993

10. Petit Larousse, Librairie Larousse, Paris 1990

ນອກນັ້ນ ຍັງມີປື້ມແບບຮຽນ ວິທະຍາສາດ, ກະສິກຳ, ວັນນະຄະດີ, ເລກ ຂອງຊັ້ນປະຖົມ ແລະ ມັດທະຍົມ ທີ່ຈັດພິມໂດຍກະຊວງສຶກສາ ໃນຊຸມປີ 1980 ແລະ 1990.

# ຄຳນຳ

ວັດທະນະທຳທາງພາສາ ເປັນສິ່ງບົ່ງບອກລະດັບ ຄວາມຈະເລີນຂອງປະເທດຊາດ, ວັດຈະນານຸກົມຈຶ່ງແມ່ນຄວາມຈຳເປັນ ຂອງສັງຄົມທີ່ຂະຫຍາຍຕົວໄປສູ່ລະດັບສູງ. ແນ່ນອນວ່າ ວັດຈະນານຸກົມຍ່ອມມີຫລາຍລະດັບ ອີງຕາມຄວາມຕ້ອງການຂອງຜູ້ຊົມໃຊ້, ດັ່ງນີ້ ວັດຈະນານຸກົມປະກອບພາບ ຈຶ່ງປາກົດຂຶ້ນມາ ໂດຍມີເປົ້າຫມາຍຮັບໃຊ້ໃຫ້ແກ່ເຍົາວະຊົນ ຜູ້ຊຶ່ງຮຽກຮ້ອງຕ້ອງການຫລາຍທີ່ສຸດ ໃນປັດຈຸບັນ.

ໃນປຶ້ມຕຳລາຕ່າງໆທີ່ສອນກັນຢູ່ໂຮງຮຽນປະຖົມ ແລະ ມັດທະຍົມນັ້ນ ມີຫລາຍໆຄຳສັບ ທີ່ນັກຮຽນຕ້ອງການຄຳອະທິບາຍ ທີ່ແຈ່ມແຈ້ງ, ວັດຈະນານຸກົມຫົວນີ້ ຈະຕອບສະຫນອງຄວາມຕ້ອງການຂອງນັກຮຽນໄດ້ສ່ວນຫນຶ່ງ ເພາະບັນຈຸຄຳສັບໄວ້ ປະມານ 2.500 ຄຳ, ນອກນັ້ນ ຍັງມີຄວາມຮູ້ຮອບຕົວ ກ່ຽວກັບ ສ.ປ.ປ.ລາວ ແລະ ຂໍ້ມູນຕ່າງໆ ອັນເປັນລັກສະນະສາກົນທີ່ນັກຮຽນຄວນຮູ້ຕື່ມອີກ. ການອະທິບາຍຄຳສັບຢ່າງແຈ່ມແຈ້ງ ທັງມີຮູບປະກອບໃຫ້ເຫັນພ້ອມ

ຈະເປັນປະໂຫຍດຢ່າງຫລວງຫລາຍໃຫ້ແກ່ຜູ້ໃຊ້ ທັງໃນແງ່ການຂຽນ ໃຫ້ຖືກຕ້ອງ ແລະ ການຮູ້ຈັກຄວາມໝາຍ ທີ່ຊັດເຈນ.

ເນື່ອງຈາກວ່າ ວັດຈະນານຸກົມແບບນີ້ ໄດ້ຮັບການຮຽບຮຽງ ຂຶ້ນເປັນເທື່ອທຳອິດໃນປະເທດເຮົາ ຈຶ່ງອາດມີສິ່ງຜິດພາດບາງ ປະການ, ຄະນະຈັດທຳ ຫວັງວ່າຈະໄດ້ຮັບຄຳຕຳໜິຕິຊົມ ໃນລັກ ສະນະສ້າງສັນ ຈາກທ່ານຜູ້ຮູ້ທັງຫລາຍ ເພື່ອຈະດັດແປງແກ້ໄຂ ໃຫ້ ສົມບູນຍິ່ງຂຶ້ນໃນໂອກາດຕໍ່ໄປ.

ວຽງຈັນ, ເມສາ 1995

# ຄຳນຳ ໃນການຈັດພິມຄັ້ງທີ 4

ປຶ້ມວັດຈະນານຸກົມປະກອບຮູບເຫລັ້ມນີ້ ໄດ້ພິມອອກຫລາຍຄັ້ງ ແລະ ແຈກຢາຍຕາມຕູ້ປຶ້ມເຄື່ອນທີ່, ຫ້ອງຮັກອ່ານປະຈຳໂຮງຮຽນ ແລະ ຫໍສະຫມຸດຕ່າງໆ ໃນເກືອບທົ່ວປະເທດ ຕາມໂຄງການສົ່ງເສີມການອ່ານຂອງຫໍສະຫມຸດແຫ່ງຊາດ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ດ້ວຍການອຸປະຖຳທຶນຈັດພິມ ຂອງສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງປະເທດຍີ່ປຸ່ນ (A. S. P. B), ນັບແຕ່ປີ 1995 ມາ ເປັນຈຳນວນ 10.000 ເຫລັ້ມ. ການຈັດພິມສາມຄັ້ງກ່ອນ ດຳເນີນຢູ່ໃນລະຍະຈັ້ງໆກັນ, ຜູ້ຮຽບຮຽງບໍ່ທັນແກ້ໄຂດັດແປງຂໍ້ມູນໂຮມທັງຄວາມຜິດພາດທາງດ້ານອັກຂະຫລະທີ່ຫລົງເຫລືອຢູ່ໃນບາງບ່ອນ.

ໃນການຈັດພິມຄັ້ງນີ້ ໄດ້ມີການເພີ່ມເຕີມຂໍ້ມູນໃຫມ່ ແລະ ດັດແປງຂໍ້ມູນເກົ່າທີ່ຫລ້າຫລັງໄປ ເຊັ່ນ ຈຳນວນປະຊາກອນໃນແຕ່ລະແຂວງ, ແຕ່ລະເມືອງ ແລະ ໃນບາງປະເທດ. ເພື່ອເຮັດໃຫ້ເນື້ອໃນຂອງປຶ້ມຫົວນີ້ສົມບູນ ແລະ ຮັບໃຊ້ນັກຮຽນ ນັກສຶກສາ ຕະຫລອດຮອດຜູ້ສົນໃຈຢາກຮຽນຮູ້ທົ່ວໄປ ກ່ຽວກັບໂລກມະນຸດເຮົາ, ຈຶ່ງໄດ້ນຳເອົາຄວາມຮູ້ ເລັກໆ ນ້ອຍໆ ກ່ຽວກັບໂລກມາພິມເປັນພາກພິເສດໃນຕອນສຸດຂອງປຶ້ມ. ໃນພາກນີ້ ຈະມີຂໍ້ມູນໃຫມ່ອຽມ (1998) ກ່ຽວກັບທີ່ຕັ້ງ, ປະຊາກອນ, ຊື່ປະເທດ ຊື່ເມືອງຫລວງ ເປັນທັງພາສາຝຣັ່ງ, ອັງກິດ ແລະ ລາວ.

ຂໍ້ມູນໃຫມ່ມີກ່ຽວກັບການສ້າງເຂື່ອນໄຟຟ້າ, ສ້າງຂົວຂ້າມນ້ຳຂອງ, ແຫລ່ງປ່າສະຫງວນ ໃນ ສ.ປ.ປ. ລາວ ແລະ ອື່ນໆ.

ວຽງຈັນ, ສິງຫາ 1998

ດວງເດືອນ ບຸນຍາວົງ

# ວິທີໃຊ້

ຢາກຮູ້ຈັກຊອກຫາຄຳໃດຄຳໜຶ່ງ ຈົ່ງເບິ່ງວິທີຂຽນລຳດັບ ດັ່ງນີ້ :

**<u>ພະຍັນຊະນະເຄົ້າ</u>** ລຽນຕາມຫລັກໄວຍາກອນ : ກ ຂ ຄ ງ ຈ ສ ຊ ຍ ດ ຕ ຖ ທ ນ ບ ປ ຜ ຝ ພ ຟ ມ ຢ ລ ວ ຫ ອ ຮ.

**<u>ພະຍັນຊະນະປະສົມ</u>** ຄື : ຫງ ຫຍ ຫນ (ໜ) ຫມ (ໝ) ຫລ (ຫຼ) ຫວ ໃຫ້ເບິ່ງຕໍ່ຈາກຕົວ ຫ.

**<u>ພະຍັນຊະນະຄວບ</u>** ຈັດໄວ້ຕອນທ້າຍຂອງແຕ່ລະພະຍັນຊະນະເຄົ້າ ຕົວຢ່າງ ກວ (ກວາງ) ຂວ ( ຂວາ ) ເປັນຕົ້ນ.

ພະຍັນຊະນະທີ່ປະກອບເຂົ້າກັບສະຫລະ ໃຫ້ເບິ່ງຕາມລຳດັບສະຫລະ ດັ່ງນີ້ : ×ະ ×າ ×ິ ×ີ ×ຶ ×ື ×ຸ ×ູ ເ×ະ ເ× ແ×ະ ແ× ໂ×ະ ໂ× ເ×າະ ×ໍ ເ×ິ ເ×ີ ເ×ືອ ເ×ືອ ເ×ັຍ ເ×ຍ ×ົວະ ×ົວ ໄ× ໃ× ເ×ົາ ×ໍາ

ຄຳຫລືພະຍາງທີ່ມີຕົວສະກົດ ລຽນໄວ້ຕາມລຳດັບພະຍັນຊະນະທີ່ເປັນຕົວສະກົດ ດັ່ງນີ້ : ກ ງ ຍ ດ ນ ບ ມ ວ

ຄຳຫລືພະຍາງ ທີ່ມີວັນນະຍຸດລຽນໄວ້ຕາມລຳດັບສຽງ ດັ່ງນີ້ : ×່ ×້ ×໊ ×໋

ແຜນທີ່ລາວໃນອາຊີອາຄະເນ.



# ຄວາມຮູ້ຮອບຕົວ ກ່ຽວກັບ ປະເທດລາວ




ເນື້ອທີ່ 236.800 ກມ²

ປະຊາກອນ (1996) 4.727.600 ຄົນ

ຊົນເຜົ່າ ລາວ-ໄຕ (ລາວລຸ່ມ) 60%

ມອນ-ຂະແມ (ລາວເທິງ) 30%

ມົ້ງ-ຢ້າວ (ລາວສູງ) 10%

ຈອມພູສູງທີ່ສຸດ : ພູເບ້ຍ

ທີ່ ແຂວງຊຽງຂວາງ 2.820 ແມັດ

■ ເຂດປ່າສະຫງວນແຫ່ງຊາດ

ປະເທດລາວ ຫລື ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເອີ້ນຫຍໍ້ວ່າ : ສ.ປ.ປ.ລ. ມີເນື້ອທີ່ 236,800 ກິໂລແມັດມົນທົນ ຢຽດຍາວ ແຕ່ເຫນືອ ເຖິງໃຕ້ ປະມານ 1,700 ກມ ບ່ອນກວ້າງສຸດ ແຕ່ຕາເວັນອອກຫາຕາເວັນຕົກ ປະມານ 400 ກມ ຄືແຕ່ແຂວງ **ອຸດົມໄຊ** ຫາແຂວງ **ຫົວພັນ**, ບ່ອນແຄບສຸດ ປະມານ 100 ກມ ຢູ່ແຂວງ **ຄໍາມ່ວນ**. ພູມປະເທດທາງພາກເຫນືອ ປົກຄຸມດ້ວຍພູຜາ ແລະ ປ່າໄມ້ ສະເລ່ຍແລ້ວພື້ນທີ່ປະເທດລາວ ເປັນພູຜາ ປະມານ 2/3 ແລະ ມີລະດັບສູງ ຈາກນໍ້າທະເລ ແຕ່ 200 ຫາ 3.000 ແມັດ. ນອກຈາກ ມີພູຜາຍັງຢາຍແຕ່ເຫນືອເຖິງໃຕ້ແລ້ວ ເນື້ອທີ່ປະມານ 47% ຍັງປົກຫຸ້ມດ້ວຍປ່າໄມ້ນາໆຊະນິດ ມີທັງໄມ້ເນື້ອແຂງ ເຊັ່ນ **ໄມ້ດູ່ ໄມ້ແຄນ ໄມ້ແຕ້ຂ່າ ໄມ້ໂລ່ງເລ່ງ ໄມ້ສັກ** ແລະ ໄມ້ເນື້ອອ່ອນ ເຊັ່ນ **ໄມ້ເປືອຍ ໄມ້ຍາງ ໄມ້ແປກ ...** ໃນລະຍະສິບປີຫລັງມານີ້ ການຕັດໄມ້ສົ່ງອອກຕ່າງປະເທດ ແລະ ຊົມໃຊ້ພາຍໃນ ສະເລ່ຍປີລະ 600,000 ມ$^3$ ນອກຈາກນີ້ ແຕ່ລະປີເນື້ອທີ່ປ່າໄມ້ປະມານ 300,000 ເຮັກຕາ ຕາມເປີ້ນພູ ຖືກຈູດຖາງເພື່ອເຮັດໄຮ່.

**ສ.ປ.ປ.ລາວ** ມີພົນລະເມືອງ 4.727.600 ຄົນ, ຄວາມຫນາແຫນ້ນສະເລ່ຍ : 18 ຄົນ/ກມ$^2$ ( ສະຖິຕິແຫ່ງລັດ 1992 )

ຈັດຢູ່ໃນກຸ່ມປະເທດ ທີ່ມີຄວາມໜາແໜ້ນທາງດ້ານພົນລະເມືອງຕໍ່າ ໃນເຂດອາຊີຕາເວັນອອກສຽງໃຕ້. ປະຊາຊົນມີສາມຊົນຊາດ ຫລື ສາມກຸ່ມໃຫຍ່ ຄື: ຊົນເຜົ່າ ***ລາວ-ໄຕ*** ຫລື ***ລາວລຸ່ມ***, ຊົນເຜົ່າ ***ມອນ-ຂະແມ*** ຫລື ***ລາວເທິງ*** ແລະ ຊົນເຜົ່າ ***ມົ້ງ-ຢ້າວ*** ຫລື ***ລາວສູງ***. ໃນນີ້ມີຊົນເຜົ່ານ້ອຍຕ່າງໆ ປະມານ 47 ເຜົ່າ. ການທຳມາຫາກິນ ການປຸກສ້າງເຮືອນຢູ່ ສິລະປະວັດທະນະທຳ ເຊັ່ນ ການມ່ອນຊິ່ນ ອັບລຳ ການຈັກສານ ຕໍ່າຫູກ ແລະ ພາສາປາກເວົ້າຂອງສາມຊົນເຜົ່າ ມີຄວາມແຕກຕ່າງກັນ.

ນະຄອນຫລວງຂອງ ***ສ.ປ.ປ.ລາວ*** ແມ່ນ ***ນະຄອນວຽງຈັນ.*** ປະເທດລາວຕັ້ງຢູ່ໃນເຂດອາຊີຕາເວັນອອກສຽງໃຕ້ ບໍ່ມີທາງອອກສູ່ທະເລ ແລະ ມີຊາຍແດນຕິດຕໍ່ກັບ ປະເທດຕ່າງໆ ດັ່ງນີ້:

ພາກເໜືອຕິດກັບ ***ສາທາລະນະລັດປະຊາຊົນຈີນ*** ມີຊາຍແດນຮ່ວມກັນ 416 ກມ.

ພາກໃຕ້ຕິດກັບ ***ລາຊະອານາຈັກກຳປູເຈຍ*** ມີຊາຍແດນຮ່ວມກັນ 492 ກມ.

ພາກຕາເວັນອອກຕິດກັບ ***ສາທາລະນະລັດ ສັງຄົມນິຍົມຫວຽດນາມ*** ມີຊາຍແດນຮ່ວມກັນ 1.957 ກມ.

ພາກຕາເວັນຕົກສຽງເໜືອ ຕິດກັບ ***ສະຫະພາບມຽນມ້າ*** ມີຊາຍແດນຮ່ວມກັນ 230 ກມ.

ພາກຕາເວັນຕົກຕິດກັບ ***ລາຊະອານາຈັກໄທ*** ມີຊາຍແດນຮ່ວມກັນ 1.730 ກມ.

ປະເທດລາວມີພູມອາກາດ ຈັດຢູ່ໃນເຂດອົບອຸ່ນ ມີສອງລະດູ ຄື ລະດູແລ້ງ ແລະ ລະດູຝົນ. ອຸນຫະພູມສະເລ່ຍ ທົ່ວປະເທດ 25 °C. ***ແມ່ນ້ຳຂອງ*** ເປັນແມ່ນ້ຳໃຫຍ່ ອັນດັບທີໜຶ່ງໃນແຫລມ ອິນດູຈີນ ແລະ ທີສາມໃນ ອາຊີ ( 4,160 ກມ ) ຖືກຳເນີດຈາກ ຈອມພູ ***ຕັນລາ*** ( Mts Tanglha ), ພາກຕາເວັນຕົກສຽງໃຕ້ຂອງຈີນ. ***ນ້ຳຂອງ*** ໄຫລຜ່ານເຂດ ***ເສສວນ ພູພຽງຢູນນານ*** ແລະ ເມືອງຊຽງຮຸ່ງ ຂອງ ***ຈີນ*** ແລ້ວຈຶ່ງຜ່ານເຂົ້າມາໃນປະເທດລາວ ທີ່ ຫລວງນ້ຳທາ ທີ່ເປັນຈຸດຕໍ່ເຂດ ***ລາວ-ຈີນ-ມຽນມ້າ.*** ຈາກນັ້ນ ***ນ້ຳຂອງ*** ໄຫລລຽບເປັນຊາຍແດນ ***ລາວ-ມຽນມ້າ*** ແລະ ເຂົ້າສູ່ເຂດ ***ລາວ-ໄທ.*** ຈຸດຕໍ່ເຂດຊາຍແດນສາມປະເທດບ່ອນນີ້ ມີຊື່ເອີ້ນກັນວ່າ ***ສາມລຽມຄຳ*** ຈາກນີ້ ***ນ້ຳຂອງ*** ໄຫລເລິກເຂົ້າສູ່ດິນລາວ ຜ່ານ ***ຫລວງພະບາງ*** ແລ້ວຈຶ່ງເວົ້ງອອກມາເປັນຊາຍແດນ ***ລາວ-ໄທ*** ຕັ້ງແຕ່ເມືອງ ***ຊະນະຄາມ*** ລົງໄປຮອດ ແຂວງ ***ຈຳປາສັກ*** ແລະ ຕົກສູ່ແດນ ***ກຳປູເຈຍ,***

***ຫວຽດນາມ*** ພາກໃຕ້ແລ້ວຈຶ່ງຕົກໃສ່ທະເລຈີນ. ***ນ້ຳຂອງ*** ໄຫລຜ່ານປະເທດລາວ ແຕ່ເຫນືອເຖິງໃຕ້ ໂຮມທັງຫມົດ 1.865 ກິໂລແມັດ. ບາງບ່ອນເປັນຊາຍແດນຂອງປະເທດ ແລະ ບາງບ່ອນໄຫລຜ່ານກາງ ເຮັດໃຫ້ເຂດແດນຂອງລາວ ມີທັງຢູ່ກ້ຳຊ້າຍ ແລະ ກ້ຳຂວາ. ກ່ອນຈະຕົກເຂົ້າສູ່ແດນ ***ກຳປູເຈຍ ນ້ຳຂອງ*** ແຕກແຜ່ພັງ ແລະ ຕົກເປັນແກ້ງໃຫຍ່ ເອີ້ນວ່າ ***ລີ່ຜີ. ລີ່ຜີ*** ເປັນນ້ຳຕົກຕາດທີ່ມີແກ້ງຫີນ ງົດງາມທັງເລິກລັບ ຫນ້າເກງຂາມ ແຫ່ງຫນຶ່ງໃນອາຊີຕາເວັນອອກສຽງໃຕ້ ແລະ ເປັນຮົ້ວປ້ອງກັນ ໂດຍທຳມະຊາດ. ***ຝະລັ່ງ*** ເຄີຍພະຍາຍາມລະເບີດ ແກ້ງຫີນໃນບໍລິເວນນີ້ ເພື່ອໃຫ້ການເດີນເຮືອສະດວກ ແຕ່ບໍ່ສຳເລັດ ຈຶ່ງເຮັດຂົວພ້ອມທາງລົດໄຟເຊື່ອມຕໍ່ດອນ ເພື່ອເຄື່ອນຍ້າຍກຳປັ່ນໄປຕາມລາງລົດໄຟ ອຳນວຍໃຫ້ກຳປັ່ນທີ່ຂຶ້ນມາແຕ່ທະເລນັ້ນແລ່ນເຖິງ***ວຽງຈັນ*** ແລະ ***ຫລວງພະບາງ*** ໄດ້. ໃຕ້ແກ້ງ ***ລີ່ຜີ*** ລົງໄປ ***ນ້ຳຂອງ*** ແຜ່ກວ້າງເປັນວັງນ້ຳເລິກ ມີ ***ປາຂ່າ*** ຫລື. ***ປາສະນ່ອຍ*** ຊຶ່ງເປັນສັດລ້ຽງລູກດ້ວຍນ້ຳນົມ ຕະກູນດຽວກັບປາ ***ດອນພີນ*** ອາໄສຢູ່. ***ນ້ຳຂອງ*** ແລະ ສາຂາຂອງມັນ ທີ່ເປັນ ແມ່ນ້ຳລຳເຊອີກສິບກວ່າສາຍ ແມ່ນແຫລ່ງຊັບພະຍາກອນທຳມະຊາດ ທີ່ຫລໍ່ລ້ຽງປະຊາຊົນລາວ ແຕ່ເຫນືອຮອດໃຕ້ ແລະ ເປັນເສັ້ນທາງຄົມມະນາຄົມ ອຳນວຍໃຫ້ ປະຊາຊົນເຂດຫ່າງໄກ ສາມາດໄປມາຫາສູ່ກັນໄດ້

ຕະຫລອດປີ. ແມ່ນ້ຳຂອງມີເກາະດອນນ້ອຍໃຫຍ່ ຢັ່ງຢາຍມາແຕ່ເໜືອສຸດໃຕ້ ບ່ອນຫລາຍທີ່ສຸດແມ່ນບໍລິເວນໃຕ້ ***ເມືອງ ໂຂງ*** ລົງໄປ, ບາງດອນ ມີປະຊາຊົນຕັ້ງບ້ານເຮືອນອາໄສຢູ່ ບາງບ່ອນເປັນສວນປູກພືດ ເຊັ່ນ ຢາດູດ, ສາລີ. ເກາະດອນສ່ວນຫລາຍຢູ່ໃນ ***ນ້ຳຂອງ*** ແມ່ນກຳມະສິດຂອງ ***ສ.ປ.ປ. ລາວ*** ຕາມສັນຍາ ***ສະຫຍາມ-ຝະລັ່ງ*** ສະບັບ ວັນທີ 13 ເດືອນກຸມພາ ຄ.ສ. 1903 ໂດຍຖືເອົາຮ່ອງນ້ຳທີ່ເລິກໃນນ້ຳຂອງ ເປັນເສັ້ນຊາຍແດນ. ***ດອນ ໂຂງ*** ເປັນດອນໃຫຍ່ກວ່າໝູ່ໃນ ***ນ້ຳຂອງ*** ຄື ກວ້າງ 6 ກມ ແລະ ຍາວ 12 ກມ. ນອກຈາກເປັນເສັ້ນທາງຄົມມະນາຄົມທີ່ດີແລ້ວ ແມ່ນ້ຳລຳເຊທັງຫລາຍຍັງເປັນແຫລ່ງພະລັງງານສຳຄັນຂອງ ***ສ.ປ.ປ. ລາວ*** ອີກ. ***ເຂື່ອນນ້ຳງື່ມ*** ທີ່ ***ແຂວງວຽງຈັນ***, ***ເຂື່ອນເຊເສັດ*** ທີ່ ***ສາລະວັນ***, ***ເຂື່ອນເຊລະບຳ*** ແລະ ເຂື່ອນນ້ອຍໆອີກຫລາຍບ່ອນ ໄດ້ສະໜອງພະລັງງານໄຟຟ້າ ທີ່ກາຍເປັນສິນຄ້າຂາອອກ ແລະ ສ້າງລາຍຮັບສ່ວນສຳຄັນ ໃຫ້ແກ່ ***ສ.ປ.ປ. ລາວ.***

***ສາທາລະນະລັດປະຊາທິປະໄຕປະຊາຊົນລາວ*** ໄດ້ຮັບການສະຖາປະນາຂຶ້ນໃນປີ ຄ.ສ. 1975 ຫລັງຈາກສົງຄາມປົດປ່ອຍຊາດຍຸດຕິລົງ ດ້ວຍໄຊຊະນະຂອງ ***ກຳລັງປະຕິວັດລາວ.*** ໄຊຊະນະດັ່ງກ່າວ ເປັນຈຸດອະວະສານ ຂອງລະບອບປົກຄອງ ແບບລາຊາ

ທີປະໄຕ ອັນມີເຈົ້າຊີວິດ ເປັນປະມຸກຂອງປະເທດ. ນັບຕັ້ງແຕ່ ***ເຈົ້າຟ້າງຸ່ມມະຫາລາດ*** ໄດ້ເຕົ້າໂຮມແຜ່ນດິນ ແລະ ປະຊາຊົນ ໃຫ້ຢູ່ພາຍໃຕ້ການປົກຄອງອັນດຽວກັນ ເມື່ອປີ ຄ.ສ.1353 ແລະ ເອີ້ນຊື່ປະເທດວ່າ : ***ອານາຈັກລ້ານຊ້າງ***. ***ອານາຈັກລ້ານຊ້າງ*** ຄ່ອຍໆຮຸ່ງເຮືອງຂຶ້ນເປັນລຳດັບ ມາຮອດສະໄໝ ***ເຈົ້າສຸລິຍະວົງສາ*** ຂຶ້ນປົກຄອງປະເທດ ແຕ່ປີ ຄ.ສ. 1633 ເຖິງ 1690, ລະຍະນີ້ຖືວ່າສາສະໜາ ວັນນະຄະດີ ໃນ ***ອານາຈັກລ້ານຊ້າງ*** ຈະເລີນຮຸ່ງເຮືອງສຸດຂີດ. ວັດວາອາຮາມ ໄດ້ຮັບການບູລະນະຮັກສາ ກໍ່ສ້າງຂຶ້ນຢ່າງຫລວງຫລາຍ, ນັກປາດອາຈານແຕ່ງໜັງສື ລຳພືດີກາ ກົດໝາຍອອກມາສິດສອນ ເປັນຕຳລາເຜີຍແຜ່ໄປທົ່ວປະເທດ. ທ່ານ ***ວັນວຸດສະຕ໊ອບ*** ພໍ່ຄ້າຊາວໂຮນລັງທີ່ໄດ້ເດີນທາງເຂົ້າມາຮອດປະເທດລາວໃນ ສະໄໝນັ້ນ ຂຽນບັນທຶກໄວ້ວ່າ: " ***ນະຄອນວຽງຈັນ*** ມີວັດຫລາຍ ແລະ ມີພະສົງທີ່ຈຳຮຽນຢູ່ໃນວັດຫລາຍກວ່າທະຫານຢູ່ໃນກອງທັບ ຂອງເຈົ້າຊີວິດ ***ກີໂຢມທີສອງ ...*** " ຫລັງຈາກ ***ເຈົ້າສຸລິຍະວົງສາ*** ແລ້ວ ***ອານາຈັກລ້ານຊ້າງ*** ຫລົ້ມຈົມລົງ ຍ້ອນເກີດຄວາມແຕກແຍກພາຍໃນ ແລະ ການຍາດແຍ່ງກັນຂຶ້ນເປັນເຈົ້າປົກຄອງ. ເຫດການວຸ່ນວາຍ ດຳເນີນຕິດຕໍ່ກັນມາຈົນຮອດ ປີ ຄ.ສ. 1779 ແລ້ວປະເທດລາວ ກໍຕົກເປັນເມືອງຂຶ້ນຂອງສະຫຍາມ.

ຈົນເຖິງປີ 1893 ***ຝະລັ່ງ*** ກໍເຂົ້າມາຍຶດເອົາ ***ລາວ*** ເປັນຫົວເມືອງຂຶ້ນ ພາຍຫລັງທີ່ໄດ້ຍຶດເອົາ ***ຂະເໝນ*** ແລະ ***ຫວຽດນາມ*** ແລ້ວເອີ້ນຮວມກັນວ່າ ***ອິນດູຈີນຝະລັ່ງ.*** ນັບແຕ່ສະໄໝ ຂຸນລໍ ພາປະຊາຊົນເຄື່ອນຍ້າຍລົງມາຕັ້ງຖິ່ນຖານບ້ານເມືອງລຽບລ່ອງນ້ຳຂອງ ເມື່ອ ຄ.ສ. 747 ມາຮອດ ປີ 1779 ນັບເປັນເວລາພັນກວ່າປີ ***ປະເທດລາວ*** ກໍເສຍເອກະລາດ ຕົກເປັນຫົວເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ ຕິດຕໍ່ກັນມາ ນັບແຕ່ ຄ.ສ. 1779 ຫາ 1975 ນັບເປັນເວລາເກືອບ 200 ປີ ຈິ່ງໄດ້ເປັນເອກະລາດຢ່າງສົມບູນ ແລ້ວມີການປ່ຽນແປງການປົກຄອງ ຈາກລະບອບລາຊາທິປະໄຕ ມາເປັນລະບອບ ສາທາລະນະລັດ.

***ສ.ປ.ປ.ລາວ*** ແບ່ງຫົວໜ່ວຍການປົກຄອງ ອອກເປັນ 16 ແຂວງ, ກຳແພງນະຄອນ ໜຶ່ງແຫ່ງ ທີ່ເປັນບ່ອນຕັ້ງນະຄອນຫລວງ ແລະ ໜຶ່ງເຂດພິເສດ ຄື : ***ເຂດພິເສດໄຊສົມບູນ*** ດັ່ງມີລາຍລະອຽດ ຕໍ່ໄປນີ້ :

| *ໝາຍເລກ* | *ຊື່ແຂວງ/ກຳແພງນະຄອນ* |
|---|---|
| 01 | ກຳແພງນະຄອນວຽງຈັນ |
| 02 | ຜົ້ງສາລີ |

| | |
|---|---|
| 03 | ຫລວງນ້ຳທາ |
| 04 | ອຸດົມໄຊ |
| 05 | ບໍ່ແກ້ວ |
| 06 | ຫລວງພະບາງ |
| 07 | ຫົວພັນ |
| 08 | ໄຊຍະບູລີ |
| 09 | ຊຽງຂວາງ |
| 10 | ວຽງຈັນ |
| 11 | ບໍລິຄຳໄຊ |
| 12 | ຄຳມ່ວນ |
| 13 | ສະຫວັນນະເຂດ |
| 14 | ສາລະວັນ |
| 15 | ເຊກອງ |
| 16 | ຈຳປາສັກ |
| 17 | ອັດຕະປື |
| 18 | ເຂດພິເສດໄຊສົມບູນ |

- ປ່າສະຫງວນແຫ່ງຊາດ ປັດຈຸບັນມີ 20 ແຫ່ງ (ຂໍ້ມູນ : ສູນປົກປັກຮັກສາປ່າສະຫງວນ ແລະຈັດສັນແຫລ່ງນ້ຳ, 1998)

# 01 ກຳແພງນະຄອນວຽງຈັນ




**ເຄື່ອງໝາຍ**

1. ເມືອງຈັນທະບູລີ
2. ເມືອງສີສັດຕະນາກ
3. ເມືອງໄຊເຊດຖາ
4. ເມືອງສີໂຄດຕະບອງ
5. ເມືອງຫາດຊາຍຟອງ
6. ເມືອງໄຊທານີ
7. ເມືອງນາຊາຍທອງ
8. ເມືອງສັງທອງ
9. ເມືອງປາກງື່ມ

0. ກຳແພງນະຄອນວຽງຈັນ

✈ ສະໜາມບິນ

— ທາງລົດ

ແມ່ນ້ຳ

| | | |
|---|---|---|
| ເນື້ອທີ່ | 3.920 ກມ$^2$ | |
| ປະຊາກອນ | 541.600 ຄົນ | |
| ຊົນເຜົ່າ | ລາວ-ໄຕ ( ລາວລຸ່ມ ) | 85% |
| | ມອນ-ຂະແມ ( ລາວເທິງ ) | 10% |
| | ມົ້ງ-ຢ້າວ ( ລາວສູງ ) | 5% |
| ວັດ | 130 ແຫ່ງ | |
| ຕະຫລາດໃຫຍ່ | 8 ແຫ່ງ | |
| ແມ່ນ້ຳ | ນ້ຳຂອງ, ນ້ຳງື່ມ, ນ້ຳທຸ່ມ, ນ້ຳປ່າສັກ | |

(ຖົມສ່ວນນຶ່ງເຮັດເປັນຮ່ອງລະບາຍນ້ຳ ໃນປີ 1997)

ຫ້ວຍຫມາກນາວ, ຫ້ວຍຫມາກຮຽວ.

ໃນລະຫວ່າງ ປີ 1997-98, ສະຫນາມບິນວັດໄຕ ໄດ້ຮັບການປັບປຸງ ຂະຫຍາຍທາງຂຶ້ນເປັນສະຫນາມບິນນາໆຊາດ ມີຍົນຂອງສາຍການບິນຕ່າງປະເທດຫລາຍສາຍ ເຊັ່ນ: ໄທ, ມະເລເຊຍ, ສິງກະໂປ, ຫວຽດນາມ ... ມາລົງອາທິດລະຫລາຍຖ້ຽວ.

ຂົວຂ້າມນ້ຳຂອງຊົ່ວທັນສະໄຫມ ສ້າງດ້ວຍຄອນກີດເສີມເຫລັກແຫ່ງທຳອິດ ຊື່ວ່າ "ຂົວມິດຕະພາບລາວໄທ" ສ້າງສຳເລັດ ແລະເປີດໃຊ້ໃນປີ 1994 ໂດຍການຊ່ວຍເຫລືອຂອງ ລັດຖະບານອົດສະຕາລີ ຕັ້ງຢູ່ໃນເຂດເມືອງຫາດຊາຍຟອງ (ຈາກໃຈກາງເມືອງ 20 ກລມ) ເຊື່ອມຕໍ່ລະຫວ່າງກຳແພງນະຄອນວຽງຈັນກັບເມືອງຫນອງຄາຍ ປະເທດໄທ.

***ກຳແພງນະຄອນວຽງຈັນ*** ຫລື ***ວຽງຈັນ*** ມີຊື່ໃນປະຫວັດສາດນັບເປັນຫລາຍຮ້ອຍປີ ຫລື ພັນກວ່າປີມາແລ້ວ ຄູ່ກັບ ***ເມືອງວຽງຄຳ*** ( ປັດຈຸບັນຊື່ວ່າ ບ້ານ ***ວຽງຄຳ*** ຢູ່ ***ແຂວງວຽງຈັນ ແຄມນ້ຳງື່ມ*** ). ເຈົ້າ***ໄຊຍະເຊດຖາທິລາດ***ໄດ້ໂຍກຍ້າຍນະຄອນຫລວງຈາກ***ຊຽງທອງ (ຫລວງພະບາງ)*** ມາ ***ວຽງຈັນ*** ໃນສະຕະວັດ ທີ 16 (ຄ.ສ. 1560) ແລະ ສ້າງສາຫໍໂຮງ ***ຫໍພະແກ້ວ ຫໍພະແຊກຄຳ ພະທາດຫລວງ*** ຫລໍ່ພຸດທະຮູບ ດ້ວຍທອງສຳລິດ ຂະໜາດໃຫຍ່ ເຊັ່ນ ***ພະອົງຕື້ ພະສຸກ ພະເສີມ ພະໃສ*** ເປັນຕົ້ນ. ໃນສະໄໝນີ້ ມີການສ້າງສາ ແລະ ສ້ອມແປງວັດຕ່າງໆຫລາຍແຫ່ງ ໂຮມທັງກຳແພງເມືອງກໍ່ດ້ວຍ ດິນຈີ່ ແລະ ດິນຫນຽວ.

ນະຄອນຫລວງ***ວຽງຈັນ*** ເປັນໃຈກາງ ຂອງວັດທະນະທຳລາວນັບຕັ້ງແຕ່ສະໄໝນັ້ນເປັນຕົ້ນມາ ແລະ ເລີ່ມຫລົ້ມຈົມລົງ ເມື່ອປະເທດລາວ ແຕກແຍກກັນເປັນສາມອານາຈັກ ເຊິ່ງຕໍ່ມາໄດ້ຕົກເປັນຫົວເມືອງຂຶ້ນຂອງ ***ສະຫຍາມ*** ພ້ອມກັນໃນປີ ຄ.ສ. 1779. ຈາກນັ້ນ ***ນະຄອນວຽງຈັນ*** ທີ່ເຄີຍຮຸ່ງເຮືອງມາໄດ້ຫລາຍສະຕະວັດ ກໍຖືກເຜົາຜານຮາບກ້ຽງລົງ ໃນສະໄໝສົງຄາມ ລະຫວ່າງ ***ເຈົ້າອະນຸວົງ*** ກະສັດອົງສຸດທ້າຍແຫ່ງລາຊະວົງ ***ວຽງຈັນ*** ກັບກອງທັບສະຫຍາມ ເມື່ອປີ ຄ.ສ. 1826-28. ບໍ່ພຽງແຕ່ວັດວາຫໍໂຮງອັນວິຈິດງົດງາມ

ຖືກນ້ຳງເພທຳລາຍເທົ່ານັ້ນ ປະຊາຊົນຄົນລາວ ກໍຖືກກວາດໄລ່ລົງໄປຢູ່ **ສະຫຍາມ** ແລະ ໄດ້ກາຍເປັນພົນລະເມືອງໄທໃນກາລະຕໍ່ມາ. ***ວຽງຈັນ*** ເປັນເມືອງຮ້າງເປົ່າແປນຢູ່ຫລາຍສິບປີ ຄືນັບແຕ່ ຄ.ສ. 1829 ເຖິງທ້າຍສະຕະວັດທີ 19 (ຄ.ສ.1893) ເມື່ອ ***ຝະລັ່ງ*** ເຂົ້າມາຍຶດເອົາເປັນຫົວເມືອງຂຶ້ນ. ນັບແຕ່ນັ້ນມາ ***ນະຄອນວຽງຈັນ*** ຈຶ່ງຄ່ອຍໆຟື້ນຊີບຄືນ ມີການສ້າງສາບູລະນະວັດວາອາຮາມທີ່ເຫລືອ ເຊັ່ນໃນປີ ຄ.ສ. 1928 ໄດ້ສ້ອມແປງ ***ຫໍພະແກ້ວ*** ແລະ ***ພະທາດຫລວງ.*** ປັດຈຸບັນ ***ວຽງຈັນ*** ເປັນນະຄອນຫລວງຂອງ ສ.ປ.ປ.ລາວ ທັງເປັນຫົວໜ່ວຍສຳຄັນຂອງການ ປົກຄອງທີ່ ເອີ້ນວ່າ ***ກຳແພງນະຄອນວຽງຈັນ,*** ມີພົນລະເມືອງທີ່ໜາແໜ້ນກວ່າໝູ່ ຄື 133 ຄົນ/ ກມ$^2$ (ຄວາມໜາແໜ້ນຕ່ຳສຸດ ແມ່ນແຂວງອັດຕະປື ແລະ ແຂວງ ເຊກອງ ຄື 8 ຄົນ/ກມ2 ).

ເຂດກຳແພງ ***ນະຄອນວຽງຈັນ*** ຕັ້ງຢູ່ລະຫວ່າງພື້ນທີ່ຮາບພຽງຂອງລ່ອງນ້ຳຂອງ ແລະ ນ້ຳງື່ມ; ມີທົ່ງຮາບພຽງ ເໝາະແກ່ການປູກຝັງ, ທົ່ງນີ້ເອີ້ນກັນວ່າ ***ທົ່ງຮາບວຽງຈັນ*** ຊຶ່ງອ້ອມດ້ວຍສາຍພູ ***ເຂົາຄວາຍ*** ຕໍ່ໃສ່ສາຍພູງູ. ເຂດກຳແພງແບ່ງອອກເປັນ 9 (ແປດ) ເມືອງ ຄື :

1. ເມືອງ ຈັນທະບູລີ
2. ເມືອງ ສີສັດຕະນາກ
3. ເມືອງ ໄຊເຊດຖາ
4. ເມືອງ ສີໂຄດຕະບອງ
5. ເມືອງ ຫາດຊາຍຟອງ
6. ເມືອງ ໄຊທານີ
7. ເມືອງ ນາຊາຍທອງ
8. ເມືອງ ສັງທອງ
9. ເມືອງປາກງື່ມ

ມີສະຖານທີ່ສຶກສາ ຊັ້ນສູງ ຊັ້ນກາງ ແລະ ຊັ້ນຕົ້ນ ທີ່ສຳຄັນຂອງລັດຖະບານ 20 ກວ່າແຫ່ງ ຊຶ່ງກວມເກືອບ 50% ຂອງສະຖາບັນສຶກສາທົ່ວປະເທດ

# ມະຫາວິທະຍາໄລແຫ່ງຊາດ

ຕັ້ງຢູ່ເຂດກຳແພງນະຄອນວຽງຈັນ ບ່ອນທີ່ເອີ້ນວ່າ ດົງໂດກ. ເປັນການລວມເອົາສະຖາບັນຊັ້ນສູງຫລາຍແຫ່ງ ມາເຂົ້າເປັນອັນດຽວ ແລະ ເລີ່ມໄຂສົກຮຽນຄັ້ງທຳອິດ ໃນປີ 1996-97. ສຳນັກງານ ອະທິການບໍດີ ຕັ້ງຢູ່ດົງໂດກ.

ມະຫາວິທະຍາໄລແຫ່ງຊາດ ມີ 8 ຄະນະວິຊາ ຄື :

- ຄະນະສຶກສາສາດ
- ຄະນະວິທະຍາສາດ
- ຄະນະກະເສດສາດ-ປ່າໄມ້
- ຄະນະວິສະວະກຳສາດ ແລະ ສະຖາປັດ
- ຄະນະພາສາ ວັນນະຄະດີ ແລະ ມະນຸດສາດ
- ຄະນະເສດຖະກິດ ແລະ ການຄຸ້ມຄອງ
- ຄະນະວິທະຍາສາດ ສາທາລະນະສຸກ
- ຄະນະວິທະຍາໄລວິທະຍາສາດພື້ນຖານ.

# 02 ແຂວງຜົ້ງສາລີ




**ເຄື່ອງຫມາຍ**

| | |
|---|---|
| ○ ທີ່ວ່າການແຂວງ | -·-·- ເສັ້ນຊາຍແດນແຂວງ |
| ● ທີ່ວ່າການເມືອງ | ----- ເສັ້ນຊາຍແດນເມືອງ |
| ສະຫນາມບິນ | —— ທາງລົດ |
| ເສັ້ນຊາຍແດນປະເທດ | ແມ່ນ້ຳ |

| | |
|---|---|
| ເນື້ອທີ່ | 16,200 ກມ² (ກ່ອນ 1995) |
| ປະຊາກອນ | 149,000 ຄົນ (ກ່ອນ 1995) |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) 15% |
| | ມອນ-ຂະແມ (ລາວເທິງ) 50% |
| | ມົ້ງ-ຢ້າວ (ລາວສູງ) 35% |
| ທີ່ວ່າການແຂວງ | ຜົ້ງສາລີ |
| ແມ່ນ້ຳສຳຄັນ | ນ້ຳອູ, ນ້ຳນົວ, ນ້ຳພາກ |

***ຜົ້ງສາລີ*** ເປັນແຂວງເຫນືອສຸດຂອງ ***ສ.ປ.ປ.ລາວ,*** ພື້ນທີ່ສ່ວນໃຫຍ່ເປັນພູຜາສູງ. ປະຊາຊົນປູກເຂົ້າດ້ວຍການເຮັດນາຂັ້ນໄດ ແລະ ປູກພືດບາງຢ່າງ ເຊັ່ນ ຊາ, ກາເຟ, ຝ້າຍ, ຢາດູດ, ຖົ່ວດິນ, ຖົ່ວເຫລືອງ, ຖົ່ວຂຽວ ແລະ ເກັບຫາເຄື່ອງປ່າຂອງດົງ ເຊັ່ນ ຫມາກແຫນ່ງ ຍານ ແລະ ອີ້ຊີ. ຊົນເຜົ່າຕ່າງໆໃນແຂວງມີ: ***ລາວ, ລື້, ຫໍ້, ກໍ່, ຢ້າວ, ກໍພູຊາງ, ພູນ້ອຍ, ມົ້ງລາຍ, ຂະມຸ*** ລັກສະນະບ້ານເຮືອນຂອງປະຊາຊົນ ແຕ່ລະຊົນເຜົ່າແຕກຕ່າງກັນ. ຊົນເຜົ່າ ***ລື້*** ຢູ່ເຮືອນມີເສົາສູງ ເຮັດດ້ວຍໄມ້ສັກ ແລະ ໄມ້ເນື້ອແຂງ. ຊົນເຜົ່າ ***ມົ້ງ ຢ້າວ*** ຢູ່ເຮືອນຕິດດິນ ເຮັດດ້ວຍໄມ້ໄຜ່ ແລະ ໄມ້ເນື້ອແຂງ. ປະຊາຊົນສ່ວນຫນຶ່ງ ຕໍ່າຫູກຝ້າຍຜະລິດເຄື່ອງໃຊ້ເຄື່ອງນຸ່ງຫົ່ມ

ບາງຢ່າງເອົາເອງ. ຊົນເຜົ່ານ້ອຍບາງກຸ່ມ ທີ່ຢູ່ຫ່າງໄກສອກຫລີກ ດຳລົງຊີວິດຕາມຮີດຄອງເດີມ ແລະ ປາກເວົ້າດ້ວຍພາສາປະຈຳເຜົ່າ. ບຸນປະເພນີທີ່ສຳຄັນ ມີບຸນປີໃໝ່ ບຸນສະຫລອງການປູກເຂົ້າ, ບຸນກູ້ເຜືອກ ກູ້ມັນ ແລະ ການເຢົາຢາ ພາຍໃນຄອບຄົວ ວາດຂັບລຳໃນທ້ອງຖິ່ນ ມີ ຂັບລື້, ຂັບພູຊາງ, ຂັບມົ້ງ ແລະ ຂັບເຕີນ.

ການເດີນທາງໄປ ***ແຂວງຜົ້ງສາລີ*** ເຮັດໄດ້ຫລາຍວິທີ ຄື ຂີ່ເຮືອຂຶ້ນຕາມ ***ນ້ຳອູ*** ແຕ່ ***ເມືອງຂວາ*** ແຂວງ ***ຜົ້ງສາລີ*** ໄປ ຫລື ຂີ່ເຮືອບິນໄປລົງ ແຂວງຫລວງນ້ຳທາ ແລ້ວເດີນທາງຕໍ່ດ້ວຍລົດຍົນ.

24/VII
ຫ້າມຈຳໜ່າຍ

# 03 ແຂວງຫລວງນ້ຳທາ




ມາດຕາສ່ວນ 1:1.750.000

**<u>ເຄື່ອງໝາຍ</u>**

- ○ ທີ່ວ່າການແຂວງ
- ● ທີ່ວ່າການເມືອງ
- ✈ ສະໜາມບິນ
- ເສັ້ນຊາຍແດນປະເທດ
- ເສັ້ນຊາຍແດນແຂວງ
- ເສັ້ນຊາຍແດນເມືອງ
- ທາງລົດ
- ແມ່ນ້ຳ

| | | |
|---|---|---|
| ເນື້ອທີ່ | 9.325 ກມ$^2$ | |
| ປະຊາກອນ | 125.000 ຄົນ | |
| ເມືອງເອກ | ຫລວງນ້ຳທາ | |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) | 34% |
| | ມອນ-ຂະແມ (ລາວເທິງ) | 35% |
| | ມົ້ງ-ຢ້າວ (ລາວສູງ) | 31% |
| ແມ່ນ້ຳສຳຄັນ | ນ້ຳທາ, ນ້ຳມາ, ນ້ຳຜາ | |

ແຂວງ ***ຫລວງນ້ຳທາ*** ຢູ່ພາກເຫນືອສຸດ ທາງທິດຕາເວັນຕົກ. ພື້ນທີ່ສ່ວນໃຫຍ່ເປັນ ພູຜາສູງ, ມີທົ່ງຮາບຫນ້ອຍຫນຶ່ງໃນເຂດເມືອງສິງ. ພູມອາກາດເຢັນ ແລະ ຊຸ່ມຊື່ນ, ຍາມຫນາວມີຫມອກກົ້ວເກືອບຕະຫລອດມື້. ປ່າດົງສ່ວນຫນຶ່ງມີສັດປ່າຂະຫນາດໃຫຍ່ ເຊັ່ນ ຊ້າງ, ງົວປ່າ, ເສືອ ... ປະຊາຊົນໃນແຂວງ ***ຫລວງນ້ຳທາ*** ມີຫລາຍຊົນເຜົ່າ ເຊັ່ນ ລື້, ຍວນ, ກໍ່, ຢ້າວ, ກຸຍ, ມູເຊີ, ແລນແຕນ, ຂະມຸ. ຊາວລື້ ເປັນຊົນເຜົ່າຫນຶ່ງທີ່ຍັງຮັກສາຮີດຄອງ ປະເພນີສັກລາຍ ແລະ ເຮັດຫູກຜ້າຝ້າຍ ຍ້ອມຫມໍ້ນິນ ຕັດເປັນເຄື່ອງນຸ່ງ.

ຊົນເຜົ່າມົ້ງ ຢ້າວ ທີ່ຢູ່ຫ່າງໄກ ມັກນຸ່ງຖືຕາມປະເພນີ ແລະ ປາກເວົ້າພາສາຂອງຕົນ. ບຸນປະເພນີ ທີ່ສຳຄັນ ມີ : ບຸນປີໃຫມ່ ຫລື ກຸດສົງການ, ບຸນຂຶ້ນເຮືອນ ... ວາດຂັບລຳ ມີ ຂັບລື້, ຂັບມົ້ງ, ຂັບຢ້າວ ແລະ ເຕີມ. ແຂວງຫລວງນ້ຳທາ ມີຖະຫນົນຕໍ່ໃສ່ ຈີນ ແລະ ນອນຢູ່ໃນຕາຫນ່າງ ສາຍການບິນລາວ.

# 04 ແຂວງອຸດົມໄຊ




<u>ເຄື່ອງໝາຍ</u>  ມາດຕາສ່ວນ 1:1.750.000

| | |
|---|---|
| ○ ທີ່ວ່າການແຂວງ | ເສັ້ນຊາຍແດນແຂວງ |
| ● ທີ່ວ່າການເມືອງ | ເສັ້ນຊາຍແດນເມືອງ |
| ສະໜາມບິນ | ທາງລົດ |
| ເສັ້ນຊາຍແດນປະເທດ | ແມ່ນ້ຳ |

| | |
|---|---|
| ເນື້ອທີ່ | 21.190 ກມ (ກ່ອນ 1995) |
| ປະຊາກອນ | 188.000 ຄົນ (ກ່ອນ 1995) |
| ທີ່ວ່າການແຂວງ | ເມືອງໄຊ |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) 31% |
| | ມອນ-ຂະແມ (ລາວເທິງ) 55% |
| | ມົ້ງ-ຢ້າວ (ລາວສູງ) 24% |
| ແມ່ນ້ຳສຳຄັນ | ນ້ຳແບ່ງ, ນ້ຳກໍ່, ນ້ຳງາ. |

***ແຂວງອຸດົມໄຊ*** ເປັນແຂວງຕັ້ງໃໝ່, ໃນສະໄໝສົງຄາມ ເຄີຍມີບົດບາດທາງດ້ານເສດຖະກິດ ຄື ມີໂຮງງານຕ່ຳແຜ່ນ. ພື້ນທີ່ສ່ວນໃຫຍ່ເປັນພູຜາ, ພູມອາກາດທົ່ວໄປເຢັນ ແລະ ຊຸ່ມຊື່ນ. ປະຊາຊົນເຮັດນາ ດ້ວຍການທົດນ້ຳຈາກຫ້ວຍ ແລະ ເຮັດໄຮ່ຕາມເປີ້ນພູ. ທີ່ວແຂວງມີຖະໜົນ 517 ກມ ແລະ ເດີ່ນຍົນຂະໜາດນ້ອຍແຫ່ງໜຶ່ງ ***ອຸດົມໄຊ*** ເປັນແຂວງໜຶ່ງທີ່ຕາມ່າງສາຍການບິນກວມເຖິງ, ເຜົ່າຕ່າງໆ ມີ : ***ລາວ, ລື້, ໄທດຳ, ໄທແດງ. ໄທຂາວ, ຍວນ, ຢ້າວ, ກໍ່, ຣະເກີງ, ປິດ, ແລນແຕນ, ມົ້ງລາຍ, ມົ້ງຂາວ, ຂະມຸຣອກ, ຂະມຸອູ,*** ປະຊາຊົນສ່ວນໜຶ່ງນຸ່ງຖືຕາມປະເພນີ ແລະ ເວົ້າພາສາປະຈຳເຜົ່າຂອງຕົນ.

ຊົນເຜົ່າ ***ລາວເທິງ*** ຫລື ***ຂະມຸ*** ນິຍົມເຮັດຖົງພາຍ ດ້ວຍ ***ປໍປ໊ຽດ*** ທີ່ລອກຈາກ ຕົ້ນປໍຊະນິດຫນຶ່ງໃນປ່າ ສ່ວນຊາວ ***ລື້*** ກໍມີຄວາມສາມາດ ຕ່ຳຫູກຜ້າຝ້າຍລາຍຂິດໃຊ້ໃນຄອບຄົວ ຢ່າງກວ້າງຂວາງ.

ບຸນປະເພນີສຳຄັນ ມີ ບຸນປີໃຫມ່, ບຸນກິນຈຽງ, ບຸນຂຶ້ນເຮືອນ ແລະ ການເຢືາຢາ ພາຍໃນຄອບຄົວ.

# 05 ແຂວງບໍ່ແກ້ວ




**ມາດຕາສ່ວນ 1 : 1.750.000**

| | | |
|---|---|---|
| ເນື້ອທີ່ | 4.970 ກມ$^2$ (ກ່ອນ 1995) | |
| ປະຊາກອນ | 104.000 ຄົນ (ກ່ອນ 1995) | |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) | 50.8% |
| | ມອນ-ຂະແມ (ລາວເທິງ) | 20.3% |
| | ມົ້ງ-ຢ້າວ (ລາວສູງ) | 20.2% |

ທີ່ວ່າການແຂວງ ເມືອງຫ້ວຍຊາຍ
ແມ່ນ້ຳສຳຄັນ ນ້ຳງາວ, ນ້ຳທາ
ແກ້ວປະເສີດ ແກ້ວດຳ ຫລື ນິນ, ແກ້ວແດງ ຫລື ໄພທູນ

***ແຂວງບໍ່ແກ້ວ*** ຕັ້ງຢູ່ແຄມນ້ຳຂອງຝັ່ງຊ້າຍ ມີພື້ນທີ່ຮາບພຽງເລັກນ້ອຍຕາມລ່ອງນ້ຳ, ພື້ນທີ່ສ່ວນໃຫຍ່ເປັນພູພຽງ ແລະ ພູສູງ. ນອກຈາກການເຮັດໄຮ່ປູກເຂົ້າແລ້ວ ປະຊາຊົນໃນແຂວງນີ້ຍັງມີອາຊີບສຳຮອງອີກຢ່າງໜຶ່ງ ຄື ການຂຸດ ແລະ ຮ່ອນແກ້ວ ຕາມບໍລິເວນແຄມຝັ່ງນ້ຳຂອງ. ປະຊາຊົນໃນ ***ແຂວງບໍ່ແກ້ວ*** ກໍຄືກັບແຂວງອື່ນໆໃນພາກເໜືອຂອງລາວ ປະກອບດ້ວຍຫລາຍຊົນເຜົ່າຄື : ***ໄຕ, ລາວ, ລື້, ຍວນ, ກໍ່, ກຸຍ, ລະເມັດ, ຢ້າວ, ແລນແຕນ, ມູເຊີ, ຂະມຸ ...*** ປະຊາຊົນຢູ່ເຂດຫ່າງໄກຍັງນຸ່ງຖືຕາມປະເພນີ. ສ່ວນໜຶ່ງ ກໍຕ່ຳຫູກ ຜະລິດຜ້າຝ້າຍ ຊົມໃຊ້ພາຍໃນຄອບຄົວເອງ. ບຸນປະເພນີສຳຄັນມີບຸນປີໃໝ່ ຫລື ກຸດສົງການ, ບຸນເກັບກ່ຽວ ແລະ ບຸນປະຈຳຄອບຄົວເຊັ່ນ ບຸນຂຶ້ນເຮືອນໃໝ່ ແລະ ການເຢົາຢາ. ວາດຂັບລຳ ມີ ຂັບລື້, ຂັບກໍ່ ຂັບເຕີມ. ການເດີນທາງໄປ ***ເມືອງຫ້ວຍຊາຍ*** ເຮັດໄດ້ຫລາຍວິທີ ເຊັ່ນ ທາງບົກ ແຕ່ ***ຫລວງນ້ຳທາ,*** ທາງອາກາດ ແຕ່ ***ວຽງຈັນ*** ແລະ ທາງນ້ຳ ແຕ່ ***ຫລວງພະບາງ.***

# 06 ແຂວງຫລວງພະບາງ



| | | |
|---|---|---|
| ເນື້ອທີ່ | 16.875 ກມ$^2$ | |
| ປະຊາກອນ | 364.840 ຄົນ | |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) | 38% |
| | ມອນ-ຂະແມ (ລາວເທິງ) | 45.5% |
| | ມົ້ງ-ຢ້າວ (ລາວສູງ) | 16.5% |
| ທີ່ວ່າການແຂວງ | ຫລວງພະບາງ | |
| ແມ່ນ້ຳສຳຄັນ | ນ້ຳຂອງ, ນ້ຳຄານ, ນ້ຳງາ, ນ້ຳງອຍ, ນ້ຳມັດ, ນ້ຳມີ້, ນ້ຳບາກ, ນ້ຳແຊງ, ນ້ຳເຊືອງ, ນ້ຳອູ. | |

***ແຂວງຫລວງພະບາງ*** ມີພື້ນທີ່ອຸດົມໄປດ້ວຍ ພູຜາ ປ່າດົງ ແລະ ຫ້ວຍນ້ຳລຳເຊຫລາຍສາຍ ອັນເຮັດໃຫ້ແຂວງນີ້ ມີທຳມະຊາດງົດງາມ ເຊັ່ນ ຖ້ຳ ຜາ, ນ້ຳຕົກຕາດ ຫລາຍແຫ່ງ. ນອກຈາກມີທຳມະຊາດ ອັນຫນ້າອອນຊອນແລ້ວ ເມືອງເອກຂອງແຂວງ ຄື ຕົວເມືອງ ***ຫລວງພະບາງ*** ນີ້ ອະດີດເຄີຍເປັນ ລາຊະທານີ ຢູ່ຫລາຍຮ້ອຍປີ. ເດີມແທ້ ***ຫລວງພະບາງ*** ມີຊື່ວ່າ ***ເມືອງຊວາ.*** ຕໍ່ມາເມື່ອ ***ຂຸນລໍ*** ເຈົ້າຊີວິດລາວ ຢູ່ ***ເມືອງກາຫລົງ ຫນອງແສ*** ຫລື ໃນພາສາ ***ຈີນ*** ເອີ້ນວ່າ ***ຕາລີຟູ*** ພາໄພ່ພົນເຄື່ອນຍ້າຍລົງມາຕັ້ງບ້ານເມືອງຕາມ

ລ່ອງນ້ຳຂອງ ແລະ ຕີເອົາເມືອງນີ້ໄດ້ ຈຶ່ງເອີ້ນວ່າ ***ເມືອງຊຽງທອງ*** ແລ້ວຕັ້ງຂຶ້ນເປັນ ລາຊະທານີ ຫລື ເມືອງເອກແຫ່ງປະເທດ ***ລ້ານຊ້າງ*** ໃນ ຄ.ສ. 757 ມາເຖິງ ຄ.ສ. 1560 ເຈົ້າ ***ໄຊຍະເຊດຖາ*** ເຫັນວ່າ ***ເມືອງຊຽງທອງ*** ຕັ້ງຢູ່ທີ່ຄັບແຄບ ທັງຢູ່ໃນເສັ້ນທາງທຽວຂອງ ***ພະມ້າ (ມ່ຽນມ້າ)*** ເຊິ່ງກຳລັງເປັນສັດຕູຢູ່ກັບ ***ເມືອງຊຽງທອງ*** ຈຶ່ງເຫັນສົມຄວນຍ້າຍ ລາຊະທານີ ລົງມາຢູ່ ***ວຽງຈັນ*** ເຊິ່ງເປັນເມືອງໃຫຍ່ມີບ່ອນທຳມາຫາກິນກວ້າງຂວາງ. ເນື່ອງຈາກວ່າ ພະພຸດທະຮູບສຳຄັນອົງໜຶ່ງ ຄື ***ພະບາງ*** ຍັງຄົງສະຖິດຢູ່ທີ່ເມືອງ ***ຊຽງທອງ,*** ເມືອງນີ້ ຈຶ່ງເອີ້ນວ່າ ***ນະຄອນຫລວງພະບາງ*** ນັບແຕ່ນັ້ນມາ.

***ນະຄອນຫລວງພະບາງ*** ມີບູຮານສະຖານ ແລະ ວັດວາອາຣາມເກົ່າແກ່ຫລາຍຮ້ອຍປີ ເຊັ່ນ ***ວັດວິຊຸນ*** ທີ່ສ້າງໃນສະໄໝ ***ເຈົ້າວິຊຸນລະລາດ*** (ຄ.ສ. 1500), ***ວັດຊຽງທອງ, ວັດມະໂນລົມ, ວັດແສນ*** ແລະ ອື່ນໆ. ການຂຸດພົບ ເຕົາເຜົາ ແລະ ເຄື່ອງປັ້ນດິນເຜົາ ທີ່ບ້ານຊ່າງໄຫ ແລະ ເຄື່ອງສັງຄະໂລກ (ເຄື່ອງປັ້ນດິນເຜົາ ເຄືອບນ້ຳຢາ ແລະ ແຕ້ມດອກດວງໃສ່) ຢູ່ຫລາຍແຫ່ງໃນ ***ແຂວງຫລວງພະບາງ*** ສະແດງວ່າ ***ຫລວງພະບາງ*** ເປັນແຫລ່ງຜະລິດສຳຄັນບ່ອນໜຶ່ງໃນພາກພື້ນນີ້. ສະເໜບອັນໜຶ່ງຂອງ ***ຫລວງພະບາງ*** ແມ່ນເຮືອນກໍ່ດິນຈີ່ ສະໄໝ ***ອານາຈັກຫລວງພະບາງ*** ຢູ່ພາຍໃຕ້ອານັກຂາຂອງ

ຝະລັ່ງ ເມື່ອທ້າຍສະຕະວັດທີ 19, ເຮືອນຊານ ແລະ ຫໍໂຮງກໍ່ດ້ວຍດິນຈີ່ ຮູບຊົງປະສົມປະສານແບບເອີລົບ ແລະ ອາຊີ ໄດ້ກາຍເປັນສັນຍະລັກຂອງ ***ຫລວງພະບາງ.*** ປະຊາຊົນໃນແຂວງ ***ຫລວງພະບາງ*** ມີຄວາມຊໍານານໃນເລື່ອງສິລະປະວັນນະຄະດີ ເຊັ່ນ ການເສບດົນຕີພື້ນເມືອງ ແລະ ລະຄອນ ***ອີ່ປ໊ອກ.*** ສິລະປະການສະແດງຢ່າງນີ້ສືບທອດມາແຕ່ສະໄຫມ ***ເຈົ້າຟ້າງຸ່ມ*** ທີ່ນໍາເອົາ ນັກເສບ ນາງລະບໍາ ນັກຟ້ອນ ແລະ ເຄື່ອງດົນຕີ ປະເພດມະໂຫລີ ຂຶ້ນມາແຕ່ເມືອງ ***ນະຄອນຫລວງ*** ຫລື ***ກໍາປູເຈຍ.*** ນອກນີ້ປະຊາຊົນແຕ່ລະທ້ອງຖິ່ນຍັງມີວາດຂັບລໍາຂອງຕົນ ເຊັ່ນ ທໍານອງອ່ານ ຫນັງສືຜູກ, ຂັບທຸ້ມ, ຂັບສະຫລາມສາມສາວ, ຂັບເຈີມເອີ່ຍ, ຂັບເຕີນລ່ອງໂຕກ, ຂັບລື້ ແລະ ຂັບມົ້ງ. ການຫັດຖະກໍາ ເຊັ່ນ ການຕໍ່າຜ້າຫໍໄຫມ, ການຊ່າງຕີເງິນ ຕີຄໍາ ເຮັດໂອ ຂັນ ງ້າວ ດາບ ຂັນຫມາກ ນໍ້າກ້ຽງ ກໍເປັນມໍລະດົກທີ່ຄົນແຂວງ ***ຫລວງພະບາງ*** ໄດ້ສືບທອດໄວ້ ຢ່າງກວ້າງຂວາງ. ອາຫານພື້ນເມືອງ ທີ່ມີຊື່ສຽງຂອງ ***ຫລວງພະບາງ*** ມີ : ເອາະຫລາມ, ແຈ່ວບອງຫນັງ, ໄຄແຜ່ນ, ນໍ້າປູ, ນໍ້າຜັກ, ສົ້ມໄຂ່ປາບຶກ ... ຍ້ອນວ່າມີຫ້ວຍນໍ້າລໍາເຊຫລາຍ ຊາວ ***ຫລວງພະບາງ*** ຈຶ່ງມີຊີວິດຕິດພັນກັບນໍ້າ ຊໍານານໃນການເດີນເຮືອ ແລະ ຮູ້ທໍາມາຫາກິນກັບນໍ້າ ເຊັ່ນ ຮ່ອນຄໍາ ຫາປາ ລ່ອງເຮືອ ເຮັດແພໃຫຍ່ຂົນສົ່ງສິນຄ້າ. ***ຫລວງພະບາງ***

ມີຊື່ສຽງວ່າ ເປັນແຂວງທີ່ມີໝາກພ້າວມັນ ແລະ ຫລາຍ ທັງມີ ໄມ້ປ່ອງ ຫລາຍທີ່ສຸດໃນປະເທດລາວ.

ຍ້ອນເປັນເມືອງທີ່ມີເອກະລັກທາງດ້ານສະຖາປັດຕະຍະກຳ ເດັ່ນ ຄືມີສິ່ງກໍ່ສ້າງ ທາດ ເຈດີ ວັດ ສິມ ຕະຫລອດຮອດເຮືອນຊານ ຫໍໂຮງເກົ່າແກ່ ທີ່ຍັງຄົງຢູ່ໃນສະພາບແໜ້ນໜາ, ອົງການສະຫະ ປະຊາຊາດເພື່ອການສຶກສາ ວິທະຍາສາດ ແລະ ວັດທະນະທຳ **(UNESCO)** ຈຶ່ງປະກາດຮັບເອົາເມືອງຫລວງພະບາງ ເຂົ້າໄວ້ໃນ ບັນຊີ "ເມືອງມໍລະດົກໂລກ" ໃນວັນທີ 2 ທັນວາ 1995. ມາຮອດ ວັນທີ 2 ກຸມພາ 1998, ລັດຖະບານແຫ່ງ ສ.ປ.ປ.ລາວ ໄດ້ຈັດພິທີ ປະກາດຢ່າງເປັນທາງການ ແລະ ຮັບເອົາໃບຢັ້ງຢືນຈາກ ທ່ານ ເຟ ເກີຣິໂກ ມາຢໍ (ເອກອະທິບໍດີຂອງ **UNESCO**). ເມືອງຫລວງ ພະບາງກາຍເປັນມໍລະດົກໂລກແຫ່ງທຳອິດ ຢູ່ໃນ ສ.ປ.ປ. ລາວ ນັບແຕ່ມື້ນັ້ນເປັນຕົ້ນມາ.

ປະຊາຊົນແຂວງ ***ຫລວງພະບາງ*** ປະກອບດ້ວຍຫລາຍຊົນເຜົ່າ ທີ່ອົບພະຍົບມາຈາກຫລາຍທ້ອງຖິ່ນ ຄື ***ລາວ, ລື້, ໄທຂາວ, ໄທດຳ, ໄທແດງ, ໄທຮຸນ, ມົ້ງຂາວ, ຂະມຸຫູ, ຍວນ, ພວນ, ຮອກ, ລະເມັດ, ກະຊັກ, ພູນ້ອຍ, ແທນ ...***

# 07 ແຂວງຫົວພັນ




ມາດຕາສ່ວນ 1 : 1.750.000

<u>ເຄື່ອງໝາຍ</u>

- o ທີ່ວ່າການແຂວງ
- • ທີ່ວ່າການເມືອງ
- ສະໜາມບິນ
- ເສັ້ນຊາຍແດນປະເທດ
- ເສັ້ນຊາຍແດນແຂວງ
- ເສັ້ນຊາຍແດນເມືອງ
- ທາງລົດ
- ແມ່ນ້ຳ

| | | |
|---|---|---|
| ເນື້ອທີ່ | 16.500 ກມ$^2$ | |
| ປະຊາກອນ | 232.000 ຄົນ | |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) | 61.% |
| | ມອນ-ຂະແມ (ລາວເທິງ) | 18.5% |
| | ມົ້ງ-ຢ້າວ (ລາວສູງ) | 19.8% |
| ທີ່ວ່າການແຂວງ | ຊຳເຫນືອ | |
| ແມ່ນ້ຳສຳຄັນ | ນ້ຳຊຳ, ນ້ຳເນີນ, ນ້ຳມ້າ, ນ້ຳແອດ | |

***ແຂວງຫົວພັນ*** ເປັນດິນແດນປະຫວັດສາດ ສຳຄັນແຫ່ງຫນຶ່ງຂອງປະເທດ ເນື່ອງຈາກທີ່ຕັ້ງທາງດ້ານພູມສາດ. ໃນສະໄຫມສົງຄາມຕໍ່ສູ້ກູ້ຊາດ ***ແຂວງຫົວພັນ*** ເປັນຖານທີ່ຫມັ້ນຂອງການປະຕິວັດ. ຖ້ຳຜາອັນກວ້າງໃຫຍ່ ແລະ ຫລວງຫລາຍ ຢູ່ ***ເມືອງວຽງໄຊ*** ບໍ່ພຽງແຕ່ເປັນບ່ອນພັກອາໄສ ອັນປອດໄພຂອງປະຊາຊົນເທົ່ານັ້ນ ແຕ່ຍັງເປັນບ່ອນຕັ້ງ ໂຮງຈັກ ໂຮງງານ ແລະ ກອງບັນຊາການ ຂອງກຳລັງປະຕິວັດອີກ. ພື້ນທີ່ສ່ວນໃຫຍ່ເປັນພູຜາສູງ, ມີຖ້ຳ, ບໍ່ນ້ຳຮ້ອນ ແລະ ໄມ້ຊະນິດຫາຍາກ ເຊັ່ນ ***ໄມ້ໂລ່ງເລ່ງ.*** ທີ່ ***ເມືອງຮ້ຽມ*** ບໍ່ນ້ຳຮ້ອນມີອຸນຫະພູມສູງເຖິງ 80 ອົງສາ (80 °C). ພູມອາກາດໂດຍທົ່ວໄປ

ຫນາວເຢັນ ພື້ນທີ່ສ່ວນຫນຶ່ງຈຶ່ງປູກຕົ້ນໄມ້ບາງຊະນິດບໍ່ໄດ້ ເຊັ່ນ ຕົ້ນພ້າວ, ຕົ້ນກ້ວຍ, ຕົ້ນຫມາກມ່ວງ, ຕົ້ນຫມາກມີ້. ນອກນີ້ ***ແຂວງຫົວພັນ*** ຍັງມີບູຮານວັດຖຸ ຍຸກຫີນໃຫມ່ ເຊັ່ນ ຫີນຕັ້ງ ອັນພາໃຫ້ເຊື່ອວ່າ ມະນຸດ ຍຸກຫີນ ເຄີຍດຳລົງຊີວິດ ຢູ່ໃນບໍລິເວນນີ້.

ປະຊາຊົນ ***ແຂວງຫົວພັນ*** ມີມູນເຊື້ອໃນການປູກມອນປ້ອນໄຫມ ມາແຕ່ບູຮານນະການ, ແມ່ຍິງສ່ວນໃຫຍ່ໃຊ້ແພຂັ້ນເຊີງພັນຫົວ ໃນລະດູຫນາວ ອາດແມ່ນຍ້ອນເຫດນີ້ ຈຶ່ງໄດ້ຊື່ວ່າ ***ແຂວງຫົວພັນ.*** ຜ້າຝ້າຍແພໄຫມຕໍ່າຈົກດ້ວຍລວດລາຍລະອຽດ ແລະ ຍ້ອມດ້ວຍສີ ທຳມະຊາດ ຂອງຊາວ ***ໄທແດງ ໄທດຳ ໄທຂາວ*** ຈາກ ***ແຂວງຫົວພັນ*** ເປັນຜະລິດພັນຫັດຖະກຳ ທີ່ບໍ່ພຽງແຕ່ສ້າງລາຍຮັບໃຫ້ແກ່ຊ່າງ ຕໍ່າຫູກເທົ່ານັ້ນ ແຕ່ຍັງສ້າງຊື່ສຽງໃຫ້ແກ່ຄົນລາວ ໂດຍທົ່ວໄປວ່າ ເປັນຊ່າງຕໍ່າຫູກ ສີມືເປັນເລີດ. ປະຊາຊົນ ***ແຂວງຫົວພັນ*** ເຊິ່ງສ່ວນ ໃຫຍ່ເປັນເຜົ່າໄຕ ຍັງຮັກສາ ແລະ ປະຕິບັດຮີດຄອງບາງຢ່າງ ຂອງ ຕົນຢູ່. ວາດຂັບລຳປະຈຳທ້ອງຖິ່ນ ມີ ຂັບ ຊຳເຫນືອ, ຂັບອີລູບ່ຳແມ້ ແລະ ຂັບມົ້ງ.


08 ແຂວງໄຊຍະບູລີ
ມ. ຄອບ
ມ. ຊຽງຮ່ອນ
ມ. ເງິນ
ມ. ທົ່ງສາ
ຂ. ຫລວງພະບາງ
ມ. ໄຊຍະບູລີ
ມ. ພຽງ
ໄທ
ຂ. ໄຊຍະບູລີ
ຂ. ວຽງຈັນ
ມ. ປາກລາຍ
ມ. ແກ່ນທ້າວ
ມ. ບໍ່ແຕນ
ເຄື່ອງໝາຍ
ທີ່ວ່າການແຂວງ
ທີ່ວ່າການເມືອງ
ສະໜາມບິນ
ເສັ້ນຊາຍແດນປະເທດ
ເສັ້ນຊາຍແດນແຂວງ
ເສັ້ນຊາຍແດນເມືອງ
ທາງລົດ
ແມ່ນ້ຳ
ມາດຕາສ່ວນ 1 : 1.750.000

| | | |
|---|---|---|
| ເນື້ອທີ່ | 11.795 ກມ$^2$ ( ກ່ອນ 1995) | |
| ປະຊາກອນ | 195.000 ຄົນ (ກ່ອນ 1995) | |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) | 74.2% |
| | ມອນ-ຂະແມ (ລາວເທິງ) | 16.5% |
| | ມົ້ງ-ຢ້າວ (ລາວສູງ) | 9.3% |
| ທີ່ວ່າການແຂວງ | ໄຊຍະບູລີ | |
| ແມ່ນ້ຳສຳຄັນ | ນ້ຳແມດ, ນ້ຳເຫືອງ, ນ້ຳງາມ, ນ້ຳຮຸ່ງ | |

***ໄຊຍະບູລີ*** ເປັນຫນຶ່ງໃນສອງແຂວງ ທີ່ມີພູມຖານຕັ້ງຢູ່ຝັ່ງຂວາຂອງນ້ຳຂອງ ດິນແດນສ່ວນນີ້ເປັນຕົ້ນເຫດໃຫ້ ***ສະຫຍາມ*** ແລະ ***ຝະລັ່ງ*** ເກີດພິພາດກັນ. ໃນປະຫວັດສາດ ***ສະຫຍາມ (ໄທ)*** ແລະ ***ຝະລັ່ງ*** ເຄີຍຍາດແຍ່ງແບ່ງປັນດິນແດນອັນເປັນ ແຂວງ ***ໄຊຍະບູລີ*** ຮອດສອງເທື່ອ ຄືເທື່ອທຳອິດໃນ ຄ.ສ. 1903 ***ສະຫຍາມ*** ໄດ້ຍິນຍອມສົ່ງຄືນໃຫ້ ***ລາວ*** ໃນຖານະວ່າ ເວລານັ້ນ ***ລາວ*** ຢູ່ໃນການຄຸ້ມຄອງຂອງ ***ຝະລັ່ງ.*** ເມື່ອ ***ຝະລັ່ງ*** ຕົກເປັນຝ່າຍ ປະລາໄຊ ແກ່ ***ເຢຍລະມັນ*** ໃນສົງຄາມໂລກຄັ້ງທີສອງ ໃນປີ ຄ.ສ. 1939-45 ແລະ ***ສະຫຍາມ*** ທີ່ເອົ້າອ້າງ ***ຍີ່ປຸ່ນ*** ຢູ່ໃນທ່າໄດ້ປຽບຈຶ່ງທວງຖາມເອົາດິນລາວ ທີ່ຢູ່

ຝັ່ງຂວາຄືນອີກ; ຕໍ່ມາ ເມື່ອສົງຄາມໂລກຄັ້ງທີສອງຍຸຕິລົງ ໃນປີ 1945 ໂດຍ ***ຍີ່ປຸ່ນ*** ຕົກເປັນຝ່າຍປະລາໄຊ, ***ຝະລັ່ງ*** ຈຶ່ງທວງເອົາຄືນ ***ລາວ*** ທາງຝັ່ງຂວາແມ່ນ້ຳຂອງ ຄື ແຂວງ ***ຈຳປາສັກ*** ແລະ ***ໄຊຍະບູລີ*** ຄືນຈາກ ***ສະຫຍາມ*** ໄດ້ອີກ.

***ໄຊຍະບູລີ*** ເປັນແຂວງທີ່ມີຊ້າງຫລາຍທີ່ສຸດ ໃນປະເທດລາວ, ປະຊາຊົນມີຄວາມຊຳນານ ໃນການຄ້ອງຊ້າງປ່າມາລ້ຽງເຝິກແອບໄວ້ລາກໄມ້. ປ່າໄມ້ໃນ ***ແຂວງໄຊຍະບູລີ*** ສ່ວນຫລາຍເປັນປ່າໄມ້ສັກ. ຊົນເຜົ່າຕ່າງໆມີ ***ລາວ, ລື້, ຂະມຸຫູ, ໄຜ້, ກຣີ (ຕອງເຫລືອງ), ອີກໍ້ ຢ້າວ ...*** ອາດຂັບລຳທ້ອງຖິ່ນມີ ລຳລ່ອງຮຸ່ງ, ຂັບລື້, ຂັບເຕີ້ມ, ຂັບມົ້ງ ...

ການຂຸດຄົ້ນຖ່ານຫີນ ລິກໄນ້ ຢູ່ ຊຽງຮ່ອນ -ຫົງສາ ເລີ່ມດຳເນີນມາແຕ່ຕົ້ນປີ 1995 ໂດຍການລົງທຶນຂອງຕ່າງປະເທດ ແນ່ໃສ່ສົ່ງອອກຖ່ານຫີນດິບເປັນຕົ້ນຕໍ. ເຫັນໄດ້ວ່າ ຖ່ານຫີນເປັນຊັບພະຍາກອນທຳມະຊາດ ທີ່ສ້າງລາຍຮັບໃຫ້ແກ່ປະເທດຢ່າງໜຶ່ງ.

# 09 ແຂວງຊຽງຂວາງ




ຫ້າມຈຳໜ່າຍ

ມາດຕາສ່ວນ 1 : 1.750.000

**ເຄື່ອງໝາຍ**

| | | | |
|---|---|---|---|
| O | ທີ່ວ່າການແຂວງ | -·-·-· | ເສັ້ນຊາຍແດນແຂວງ |
| ● | ທີ່ວ່າການເມືອງ | ------ | ເສັ້ນຊາຍແດນເມືອງ |
| ✈ | ສະໜາມບິນ | —— | ທາງລົດ |
| —+·+— | ເສັ້ນຊາຍແດນປະເທດ | | ແມ່ນ້ຳ |

| | | |
|---|---|---|
| ເນື້ອທີ່ | 17.315 ກມ$^2$ (ກ່ອນ 1995) | |
| ປະຊາກອນ | 191.000 ຄົນ (ກ່ອນ 1995) | |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) | 61.3% |
| | ມອນ-ຂະແມ (ລາວເທິງ) | 7% |
| | ມົ້ງ-ຢ້າວ (ລາວສູງ) | 31.7% |
| ທີ່ວ່າການແຂວງ | ເມືອງແປກ | |
| ແມ່ນ້ຳສຳຄັນ | ນ້ຳງື່ມ, ນ້ຳຍອນ, ນ້ຳມັດ, ນ້ຳງີ້ວ | |

***ແຂວງຊຽງຂວາງ*** ມີຄວາມສຳຄັນ ທັງໃນດ້ານຍຸດທະສາດການເມືອງ ແລະ ປະຫວັດສາດຍຸກບູຮານ. ຈອມພູສູງທີ່ສຸດໃນປະເທດລາວ ແມ່ນ ***ພູເບ້ຍ*** (2.820 ແມັດ) ຢູ່ໃນແຂວງ ***ຊຽງຂວາງ*** ໃນສະໄຫມສົງຄາມ ຕໍ່ສູ້ກູ້ຊາດ ***ພູເບ້ຍ*** ແມ່ນຈຸດທີ່ທຸກຝ່າຍຢາກຍຶດຄອງເພາະສູງ ກວ່າຫມູ່. ***ຊຽງຂວາງ*** ແມ່ນເຂດຍາດແຍ່ງຂອງກອງກຳລັງຕ່າງໆ ແລະ ໄດ້ກາຍເປັນສະຫນາມຣົບ ທີ່ຖືກຖິ້ມລະເບີດໃສ່ຫນັກຫນ່ວງກວ່າຫມູ່ ຄືປະມານ 2.000.000 ໂຕນ (ສອງລ້ານ) ອັນເຮັດໃຫ້ປະຊາຊົນໃນ ແຂວງ ***ຊຽງຂວາງ*** ຕ້ອງອົບພະຍົບຫນີ ແລະ ຕົວເມືອງ ***ຊຽງຂວາງ*** ເອງກໍຖືກທຳລາຍຢ່າງບໍ່ເຫລືອເຮືອນຈັກຫລັງ. ເມື່ອສົງຄາມຍຸດຕິລົງໃນປີ 1973 ຊາວ ***ຊຽງຂວາງ*** ຈຶ່ງພາກັນກັບຕ່າວຄືນບ້ານ ແລະ ສ້າງສາບ້ານເມືອງຄືນໃຫມ່.

ເຖິງວ່າ ***ຊຽງຂວາງ*** ມີນ້ຳຫ້ວຍໄຫລຜ່ານຫລາຍສາຍ ແຕ່ຫ້ວຍເຫລົ່ານັ້ນ ມີແລວນ້ຳບໍ່ກວ້າງປານໃດ ຈຶ່ງບໍ່ສາມາດຫລ່ອເຮືອໄດ້ ທັງພື້ນທີ່ສ່ວນໃຫຍ່ກໍເປັນພູພຽງຫົວໂລ້ນ ທີ່ຢູ່ໃນ ລະດັບສູງກວ່ານ້ຳທະເລ. ປ່າດົງສ່ວນຫນຶ່ງ ເປັນປ່າໄມ້ເນື້ອແຂງ ແຕ່ສ່ວນໃຫຍ່ເປັນປ່າແປກ. ***ແຂວງຊຽງຂວາງ*** ມີບໍ່ນ້ຳຮ້ອນທຳມະຊາດຫລາຍບ່ອນ ເຊັ່ນ ຢູ່ ***ເມືອງຄຳ*** ແລະ ***ເມືອງຄູນ*** ເປັນຕົ້ນ.ພູມອາກາດໂດຍທົ່ວໄປຫນາວເຢັນ ແລະ ມີລົມພັດຢູ່ຕະຫລອດປີ. ທຳມະຊາດ ***ຊຽງຂວາງ*** ຍາມຕົ້ນລະດູແລ້ງ ຄືກັບລະດູບານໃຫມ່ ໃນປະເທດທີ່ອາກາດອົບອຸ່ນ ຄືມີຕົ້ນໄມ້ຫລົ່ນໃບຫມົດ ແລ້ວອອກດອກບານພ້ອມກັນຢູ່ຕາມເປີ້ນພູ. ***ຊຽງຂວາງ*** ເປັນແຂວງດຽວ ໃນປະເທດລາວ ທີ່ປູກຫມາກລາຍ ຫມາກຈອງ ແລະ ຫມາກຫມັ້ນໄດ້. ຕົ້ນໄມ້ຊະນິດນີ້ ຄືນ ***ຝະລັ່ງ*** ໄດ້ນຳມາປູກທົດລອງ ຕັ້ງແຕ່ສະໄຫມພວກເຂົາມາຢູ່ລາວໃຫມ່ໆ. ນອກຈາກເປັນດິນແດນທີ່ມີທຳມະຊາດແປກຕ່າງຫມູ່ແລ້ວ ***ແຂວງຊຽງຂວາງ*** ຍັງມີບູຮານວັດຖຸເກົ່າແກ່ຫລາຍພັນປີອີກຄື ***ໄຫຫີນ*** ຂະຫນາດໃຫຍ່ນ້ອຍຕ່າງກັນ ຈຳນວນຫລາຍຮ້ອຍຫນ່ວຍ ທີ່ວາງຢາຍຢູ່ຕາມທົ່ງພຽງໃກ້ ***ເມືອງແປກ***. ນັກປະຫວັດສາດ ທັງຫລາຍຖືວ່າ ***ໄຫຫີນ*** ເຫລົ່ານີ້ເປັນບູຮານ ວັດຖຸທີ່ມີຄຸນຄ່າສູງຕໍ່ການສຶກສາ ແລະ ເປັນສິ່ງຢັ້ງຢືນວ່າ ດິນແດນແຫ່ງນີ້ເຄີຍມີມະນຸດ

ຢູ່ມາຫລາຍພັນປີ ຫລື ແສນປີແລ້ວ ຕຳນານພື້ນເມືອງເລົ່າວ່າ ***ໄທທີນ*** ຍັກເຫລົ່ານີ້ແມ່ນໄທເຫລົ້າ ຂອງ ***ທ້າວເຈືອງ*** ກະສັດຜູ້ຍິ່ງໃຫຍ່ ເຊື້ອຊາດຂອມ ໃນສະໄຫມບູຮານ.

***ໄທພວນ*** ຫລື ***ໄທຊຽງຂວາງ*** ເຄີຍຜ່ານຊາຕາກຳອັນໂຫດຮ້າຍທີນທຸກທໍລະມານຍ້ອນ ເສິກສົງຄາມ ຕ້ອງອົບພະຍົບຄົວເຮືອນ ແລະ ຖືກກວາດໄລ່ຫລາຍເທື່ອຫລາຍທີ ໃຫ້ຫນີຈາກຖິ່ນຖານ ບ້ານເກີດເມືອງນອນ ນັບແຕ່ກາງສະຕະວັດທີ 18 ເປັນຕົ້ນມາ. ຄວາມບໍ່ສະຫງົບພາຍໃນປະເທດເຮັດໃຫ້ ***ໄທພວນຊຽງຂວາງ*** ຕ້ອງແບກຫາບພາລະຫນັກ ເຊັ່ນ ບາງຄັ້ງຕ້ອງເສຍພາສີໃຫ້ທັງທາງ ***ອານາຈັກວຽງຈັນ*** ແລະ ***ອານາຈັກອັນນາມ.*** ໄທພວນຊຽງຂວາງຈຳນວນຫລາຍພັນຄອບຄົວ ຕົກໄປຢູ່ປະເທດ ***ສະຫຍາມ*** ເຊັ່ນທີ່ເມືອງ ***ສີສັດຊະນາໄລ,*** ເມືອງ ***ສະລະບຸລີ, ບ້ານຊຽງ (ແຂວງອຸດອນ)*** ເປັນຕົ້ນ.

***ໄທພວນຊຽງຂວາງ*** ມີຄວາມຊຳນານໃນການປູກມອນປ້ອນໄຫມ ມັດຫມີ່ຕໍ່ລາຍ ມີຊື່ລືຊາ ບໍ່ຫນ້ອຍຫນ້າຊາວເມືອງອື່ນ ໂດຍສະເພາະການມັດຫມີ່ ດ້ວຍໄຫມຍອດເສັ້ນແລບບາງ ແລະ ລາຍນ້ອຍ

ສັບສົນ. ໄທ **ຊຽງຂວາງ** ມີນິໄສມັກຕ້ອນຮັບແຂກຄົນ. ເຂົາເຈົ້າມີຄຳເວົ້າປະຈຳທ້ອງຖິ່ນວ່າ ເວລາມີແຂກມາຢ້ຽມຢາມຈະບໍ່ໃຫ້ແຂກລົງເຮືອນມືເປົ່າ ຄື ຕ້ອງມີເຄື່ອງຝາກຂອງຕ້ອນໃສ່ມືໃຫ້ແຂກ. ໄທ **ຊຽງຂວາງ** ມີພອນສະຫວັນໃນການຂັບລຳ ຈ່າຍຜະຫຍາ ກໍຮອກັນ. ນອກຈາກ ***ໄທພວນ*** ແລະ ເຜົ່າໄຕອື່ນໆ ແລ້ວ **ຊຽງຂວາງ** ເປັນແຂວງທີ່ມີປະຊາຊົນເຜົ່າ ***ມົ້ງ*** ຫລາຍກວ່າໝູ່. ວາດຂັບລຳ ທີ່ນິຍົມກັນມີໂອ່ພວນ ແລະ ຂັບມົ້ງ.

# 10 ແຂວງວຽງຈັນ




**ເຄື່ອງຫມາຍ**

- ○ ທີ່ວ່າການແຂວງ
- ● ທີ່ວ່າການເມືອງ
- ສະຫນາມບິນ
- ເສັ້ນຊາຍແດນປະເທດ
- ເສັ້ນຊາຍແດນແຂວງ
- ເສັ້ນຊາຍແດນເມືອງ
- ທາງລົດ
- ແມ່ນ້ຳ

ມາດຕາສ່ວນ 1:1.750.000

| | | |
|---|---|---|
| ເນື້ອທີ່ | 19.990 ກມ$^2$ (ກ່ອນ 1995) | |
| ປະຊາກອນ | 321.000 ຄົນ (ກ່ອນ 1995) | |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) | 71.8% |
| | ມອນ-ຂະແມ (ລາວເທິງ) | 12.8% |
| | ມົ້ງ-ຢ້າວ (ລາວສູງ) | 15.4% |
| ທີ່ວາການແຂວງ | ໂພນໂຮງ | |
| ແມ່ນ້ຳສຳຄັນ | ນ້ຳງື່ມ, ນ້ຳລີກ, ນ້ຳຊອງ | |
| ເຂື່ອນໄຟຟ້ານ້ຳງື່ມ | ສະມັດຖະພາບ | 150 Mw |
| ອ່າງນ້ຳງື່ມ | ການຫາປາ | 2-4 ໂຕນ/ມື້ |
| ບໍ່ເກືອ | ເມືອງທຸລະຄົມ | |

***ແຂວງວຽງຈັນ*** ເປັນແຂວງຕັ້ງໃຫມ່ເມື່ອ ຄ.ສ. 1986 ເພື່ອໃຫ້ສອດຄ່ອງກັບການ ຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການປົກຄອງຂອງປະເທດ. ພື້ນທີ່ ມີທັງຮາບພຽງ ພູເນີນ ແລະ ຜາສູງ. ບ່ອນຮາບພຽງທີ່ເອີ້ນກັນວ່າ ທົ່ງທຸລະຄົມນັ້ນ ຢູ່ລຽບລ່ອງ ນ້ຳງື່ມ ແລະ ລາມໄປສຸດລົງທີ່ ພູເຂົາຄວາຍ, ດ້ານເຫນືອ ແລະ ທິດຕາເວັນອອກ ແຕ່ສາຍພູພະຂື້ນໄປ ພື້ນທີ່ ເປັນພູສູງ ມີຜາຫີນ ຖ້ຳ

ແລະ ປາດົງດິບ ອັນເຮັດໃຫ້ ***ແຂວງວຽງຈັນ*** ມີທຳມະຊາດຫລາຍແບບ ແລະ ມີຊັບພະຍາກອນແຮ່ທາດ ສຳຄັນຫລາຍຢ່າງ ເຊັ່ນ ***ຖ່ານຫີນ*** (ຫີ່ນາມອນ), ***ຫີນກາວ, ໂປຕັດ, ຊືນ.***

***ແຂວງວຽງຈັນ*** ເປັນເຂດເສດຖະກິດບ່ອນສຳຄັນຂອງປະເທດ ເພາະກະແສໄຟຟ້າ ຜະລິດຈາກເຂື່ອນນ້ຳງື່ມ ແມ່ນສິນຄ້າຂາອອກອັນສ້າງລາຍຮັບຕົ້ນຕໍໃຫ້ແກ່ ***ສ.ປ.ປ.ລາວ.*** ທົ່ງພຽງ ແລະ ດິນ ຕາມ ***ລ່ອງນ້ຳງື່ມ*** ແລະ ແມ່ນ້ຳອື່ນໆ ເຮັດໃຫ້ ແຂວງວຽງຈັນມີພືດພັນທັນຍາຫານອຸດົມສົມບູນຕະຫລອດປີ.

ໃນປະຫວັດສາດ ***ແຂວງວຽງຈັນ*** ແມ່ນເຂດເມືອງເກົ່າທີ່ມີຊື່ວ່າ ເມືອງ ***ວຽງຄຳ*** (ປັດຈຸບັນເປັນບ້ານ ຊື່ ***ບ້ານວຽງຄຳ***) ແລະ ***ເມືອງໄຜ່ຫນາມ*** ( ຢູ່ໃນເຂດເມືອງເກົ່າ ***ປາກກະຍູງ*** ແລະ ***ທຸລະຄົມ*** ) ດັ່ງມີວັດຖຸບູຮານປາກົດເປັນຫລັກຖານ ຄື : ເສົາຫີນ ຝັງຢູ່ບ້ານ ***ວຽງຄຳ,*** ລະບົບຂຸມຄອງເຊື່ອງ ***ເຈົ້າຟ້າງຸ່ມ*** ໃຫ້ກອງທະຫານຂຸດໃນເວລາຍົກກອງທັບມາລ້ອມຕີເອົາ ເມືອງ ***ວຽງຄຳ*** ແລະ ເມືອງ ***ໄຜ່ຫນາມ.*** ນອກນີ້ ປະຊາຊົນໃນບ້ານນີ້ ຍັງພົບທອກ ແລະ ງາວບູຮານ ໃກ້ໆບໍລິເວນເມືອງເກົ່າ, ໄທບ້ານນາເຄືອ ພົບສຽນພະພຸດທະຮູບຫີນ ສະໄຫມສະຕະວັດທີ 7-8 ຝັງດິນ ໃນບໍລິເວນແຄມນ້ຳງື່ມ ແລະ ທີ່ຖ້ຳວັງຊາງ ກໍມີພະພຸດທະຮູບຫີນ ຄວັດໃສ່ຜະຫນັງຖ້ຳ. ນອກ

ຈາກນີ້ ຍັງມີບູຮານວັດຖຸ ທີ່ສ້າງຂຶ້ນໃນ ສະໄໝເຈົ້າ ***ໄຊຍະເຊດຖາ*** ລົງມາຕັ້ງ ***ວຽງຈັນ*** ເປັນເມືອງຫລວງອີກ ຄື ***ພະເຈົ້າອົງຕື້*** ທີ່ເປັນພະພຸດທະຮູບທອງສຳລິດ ອົງມະຫຶມາ ທີ່ປະດິດສະຖານຢູ່ວັດອົງຕື້ ແຄມຝັ່ງຊ້າຍນ້ຳງື່ມ.

ເນື່ອງຈາກວ່າ ***ວຽງຈັນ*** ເປັນແຂວງຕັ້ງໃໝ່ ຈຶ່ງມີປະຊາຊົນໂຍກຍ້າຍມາແຕ່ບ່ອນອື່ນ ເຂົ້າມາຕັ້ງຖິ່ນຖານຢູ່ເປັນອັນມາກ. ເດີມແທ້ ປະຊາຊົນເຂດນີ້ ແມ່ນ ***ໄທພວນ*** ຫລື ມັກເອີ້ນກັນວ່າ ***ໄທງື່ມ*** ຄືຄົນທີ່ຢູ່ຕາມລ່ອງນ້ຳງື່ມ ຜູ້ມີຄວາມສາມາດໃນການປູກມອນ ປ້ອນໄໝ ເຊັ່ນດຽວກັບ ***ໄທພວນຊຽງຂວາງ. ແຂວງວຽງຈັນ*** ກໍຄືແຂວງອື່ນໆ ໃນ ***ສ.ປ.ປ.ລາວ*** ມີປະຊາຊົນຫລາຍຊົນຊາດຊົນເຜົ່າຢູ່ຮ່ວມກັນ ຄື ***ລາວ, ພວນ, ມົ້ງ, ຂະມຸ, ໄທດຳ, ໄທແດງ.*** ວາດຂັບລຳທີ່ມີຊື່ສຽງ ແມ່ນ ***ຂັບງື່ມ, ຂັບແມ້ນ*** ແລະ ***ຂັບໄທດຳ.***

# 11 ແຂວງບໍລິຄໍາໄຊ



| | | |
|---|---|---|
| ເນື້ອທີ່ | 16.470 ກມ² (ກ່ອນ 1995) | |
| ປະຊາກອນ | 151.000 ຄົນ (ກ່ອນ 1995) | |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) | 69% |
| | ມອນ-ຂະແມ (ລາວເທິງ) | 20.7% |
| | ມົ້ງ-ຢ້າວ (ລາວສູງ) | 10.3% |
| ທີ່ວ່າການແຂວງ | ປາກຊັນ | |
| ແມ່ນ້ຳສຳຄັນ | ນ້ຳຂອງ, ນ້ຳຊັນ, ນ້ຳກະດິງ, ນ້ຳເລີກ, ນ້ຳງຽບ. | |

24/VII

***ບໍລິຄຳໄຊ*** ເປັນແຂວງໃໝ່ ທີ່ຕັ້ງຂຶ້ນພາຍຫລັງການສ້າງຕັ້ງ ***ສ.ປ.ປ.ລາວ*** ເມື່ອປີ 1975, ເປັນແຂວງໜຶ່ງທີ່ມີຄວາມສຳຄັນທາງດ້ານຍຸດທະສາດ ເພາະເປັນເຂດກິ່ວ ແຄບ ກວ່າໝູ່ ແລະ ກັ້ນສອງປະເທດເພື່ອນບ້ານ ຄື ***ໄທ*** ແລະ ***ຫວຽດນາມ.*** ດ້ວຍເສັ້ນທາງເລກທີ 13 ແລະ 8 ທີ່ເຊື່ອມຕໍ່ແຂວງຕ່າງໆ ແຕ່ເໜືອຫາໃຕ້ໃສ່ກັນ, ***ແຂວງບໍລິຄຳໄຊ*** ເປັນຈຸດຜ່ານເຄິ່ງກາງທີ່ສຳຄັນ. ຢູ່ໃນແຂວງນີ້ມີຂົວຂະໜາດໃຫຍ່ ສອງຂົວ ຄື :

ຂົວ ***ຢູຣີກາກາຣິນ*** ປາກກະດິງ, ພື້ນທີ່ຮາບພຽງຕາມ

ລ່ອງນ້ຳຂອງ, ນ້ຳຊັນ ແລະ ນ້ຳງຽບ ອຳນວຍໃຫ້ມີເນື້ອທີ່ປູກຝັງ ເລັກນ້ອຍ. ***ແຂວງບໍລິຄຳໄຊ*** ເປັນເຂດໜຶ່ງ ທີ່ເຄີຍມີປ່າດົງດິບ ອຸດົມສົມບູນດ້ວຍສັດປ່າ ໄມ້ມີຄ່າ ແລະ ພືດເປັນຢາ. ປະຊາຊົນເຜົ່າຕ່າງໆ ມີ : ***ລາວ, ພວນ, ໄຕເມີ້ຍ, ໄຕຍໍ້, ມາກອງ, ມາແລງ, ກະຕາງ, ໂຊະ, ຊ້ວຍ ...*** ວາດຂັບລຳທ້ອງຖິ່ນ ທີ່ນິຍົມກັນຫລາຍແມ່ນ ຂັບເມີ້ຍ ແລະ ລຳຜູ້ໄທ.

# 12 ແຂວງຄຳມ່ວນ




**ເຄື່ອງໝາຍ**

○ ທີ່ວ່າການແຂວງ

● ທີ່ວ່າການເມືອງ

ສະໜາມບິນ

ເສັ້ນຊາຍແດນປະເທດ

ເສັ້ນຊາຍແດນແຂວງ

ເສັ້ນຊາຍແດນເມືອງ

ທາງລົດ

ແມ່ນ້ຳ

ມາດຕາສ່ວນ 1:1.750.000

| | | |
|---|---|---|
| ເນື້ອທີ່ | 16.315 ກມ$^2$ | (ກ່ອນ 1995) |
| ປະຊາກອນ | 258.000 ຄົນ | (ກ່ອນ 1995) |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) | 36% |
| | ມອນ-ຂະແມ (ລາວເທິງ) | 64% |
| | ມົ້ງ-ຢ້າວ (ລາວສູງ) | 0 |
| ທີ່ວ່າການແຂວງ | ທ່າແຂກ | |
| ແມ່ນ້ຳສຳຄັນ | ນ້ຳເທີນ, ເຊບັ້ງໄຟ | |

***ແຂວງຄຳມ່ວນ*** ມີຄວາມສຳຄັນໃນດ້ານເສດຖະກິດ ດ້ວຍວ່າ ມີເສັ້ນທາງເລກທີ 12 ເຊື່ອມຕໍ່ປະເທດລາວໃສ່ທະເລ ***ຫວຽດນາມ*** ທີ່ ***ເມືອງວິນ.*** ນັບວ່າເປັນທາງອອກສູ່ທະເລຂອງ ***ລາວ*** ທີ່ສຳຄັນ ບ່ອນຫນຶ່ງ. ຢູ່ແຂວງນີ້ ມີຊົນຊາດລາວເທິງຫລາຍເຜົ່າ ຕ່າງກັບເຜົ່າ ***ລາວເທິງ*** ທາງພາກເຫນືອ ແລະ ບໍ່ມີຢູ່ໃນແຂວງອື່ນ ເຊັ່ນ ເຜົ່າ ມະແລງ, ມາກອງ ເປັນຕົ້ນ. ນັກປະຫວັດສາດຄືດວ່າ ***ແຂວງຄຳມ່ວນ*** ເປັນບ່ອນແບ່ງເຂດການເຄື່ອນທີ່ໂຍກຍ້າຍຂອງຊົນຊາດເຜົ່າຕ່າງໆ ໃນລາວ. ນັບແຕ່ເຂດນີ້ລົງໄປບໍ່ພົບເຫັນຊົນເຜົ່າ ***ມົ້ງ-ຢ້າວ*** ອີກ.

***ແຂວງຄຳມ່ວນ*** ມີບໍ່ແຮ່ທາດສຳຄັນ ເຊັ່ນ ບໍ່ກົ່ວ ຢູ່ໂພນຕີ້ວ. ພູພຽງນາແປ ແລະ ນາກາຍ ມີປ່າໄມ້ທີ່ມີຄ່າ ເຊັ່ນ ໄມ້ແປກ, ໄມ້ເກດ ສະໜາ ແລະ ເປັນແຫລ່ງທີ່ສັດປ່າເດີນທາງຜ່ານ.

ເຂື່ອນໄຟຟ້ານ້ຳເທີນຫີນບູນ ທີ່ເລີ່ມກໍ່ສ້າງມາແຕ່ ປີ 1994 ສຳເລັດລົງໃນຕົ້ນປີ 1998 ແລະ ເປີດໃຊ້ຢ່າງເປັນທາງການ ໃນເດືອນ ເມສາ (04) 1998 ມີສະມັດຖະພາບຜະລິດພະລັງງານ ໄຟຟ້າ 210 ເມກາວັດ **(MW)**, ມູນຄ່າກໍ່ສ້າງ 280.000.000 ໂດລາ (2,8 ຕື້), ນັບເປັນແຫລ່ງພະລັງງານໄຟຟ້ານ້ຳຕົກ ໃຫຍ່ທີ່ສຸດ ໃນ ສ.ປ.ປ. ລາວ. ພະລັງງານສ່ວນໃຫຍ່ ສົ່ງຂາຍໃຫ້ປະເທດ ເພື່ອນບ້ານ ຄືໄທ ແລະ ຫວຽດນາມ.

ໃນປະຫວັດສາດ ***ແຂວງຄຳມ່ວນ*** ເຄີຍເປັນທີ່ຕັ້ງຂອງອານາ ຈັກໜຶ່ງທີ່ເອີ້ນວ່າ ***ໂຄດຕະບູນ*** ປະມານພັນກວ່າປີມາແລ້ວ ດັ່ງມີ ທາດເກົ່າແກ່ ຄື ***ທາດໂຄດຕະບູນ*** ຫລື ***ໂຄດຕະບອງ*** ປາກົດເປັນ ຫລັກຖານ ມາຈົນເທົ້າທຸກວັນນີ້.

ຊົນເຜົ່າຕ່າງໆ ໃນແຂວງຄຳມ່ວນ ມີ : ***ຜູ້ໄທ, ລາວ, ໂຊ້, ມາກອງ, ເຈຣີ, ຕຣູຍ, ຕະໂອ້ຍ, ກຣີ ຫລື ຕອງເຫລືອງ, ກະຕາງ ...*** ວາດຂັບລຳທີ່ນິຍົມແມ່ນ ລຳມະຫາໄຊ ແລະ ຂັບຂອງຊົນເຜົ່າຕ່າງໆ.

# 13 ແຂວງສະຫວັນນະເຂດ




ມາດຕາສ່ວນ 1:1.750.000

<u>ເຄື່ອງໝາຍ</u>

- ○ ທີ່ວ່າການແຂວງ
- ● ທີ່ວ່າການເມືອງ
- ✈ ສະໜາມບິນ
- -·-·- ເສັ້ນຊາຍແດນປະເທດ
- -·-·- ເສັ້ນຊາຍແດນແຂວງ
- ----- ເສັ້ນຊາຍແດນເມືອງ
- —— ທາງລົດ
- ແມ່ນ້ຳ

| | |
|---|---|
| ເນື້ອທີ່ | 22.080 ກມ$^2$ (ກ່ອນ 1995) |
| ປະຊາກອນ | 673.000 ຄົນ (ກ່ອນ 1995) |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) 67% |
| | ມອນ-ຂະແມ (ລາວເທິງ) 33% |
| | ມົ້ງ-ຢ້າວ (ລາວສູງ) 0 |
| ທີ່ວ່າການແຂວງ | ຄັນທະບຸລີ |
| ແມ່ນ້ຳສຳຄັນ | ເຊຈຳພອນ, ເຊບັ້ງຫຽງ |

***ສະຫວັນນະເຂດ*** ເປັນແຂວງທີ່ກວ້າງໃຫຍ່ກວ່າໝູ່ ແລະ ມີປະຊາຊົນຫລາຍທີ່ສຸດ ໃນ ***ສ.ປ.ປ.ລາວ*** ຄືປະມານ 15% ຂອງພົນລະເມືອງລາວທັງໝົດ. ພື້ນທີ່ສ່ວນໃຫຍ່ຮາບພຽງ ແຕ່ທິດຕາເວັນຕົກລາມຈາກລ່ອງນ້ຳຂອງໄປຮອດ ສາຍພູຫລວງ ທາງທິດຕາເວັນອອກມີທາງ ເລກທີ 9 ຕັດອອກຈາກທາງເລກທີ 15 ເນັ່ງຜ່ານທົ່ງພຽງ ***ສະຫວັນນະເຂດ*** ອອກສູ່ທະເລທີ່ ເມືອງ ***ດົ່ງຮ່າ*** ໃນຫວຽດນາມ. ທ່າເຮືອແກ້ງກະເບົາ ເປັນທ່າເຮືອຂະໜາດໃຫຍ່ໃນນ້ຳຂອງ ທີ່ອຳນວຍໃຫ້ການຄົມມະນາຄົມ ຂົນສົ່ງແຕ່ ***ໄທ*** ຜ່ານ ***ລາວ*** ຫາ ***ຫວຽດນາມ*** ສະດວກຂຶ້ນ. ***ສະຫວັນນະເຂດ*** ມີອາກາດຮ້ອນ ແລະ

ແຫ້ງແລ້ງ ເນື່ອງຈາກການສູນເສຍປ່າໄມ້ດົງດິບຢ່າງໄວວາ. ຊັບພະຍາກອນທຳມະຊາດມີ ***ບໍ່ທີນກາວ, ບໍ່ຊືນ, ບໍ່ຄຳ.*** ນອກນີ້ ເພິ່ນຍັງພົບຊາກກະດູກສັດບູຮານ ຄື ໂຕກະປອມຫລວງ ຫລື ***ໄດໂນເສົາ*** ຢູ່ໃນເຂດບ້ານຕັ່ງຫວາຍ ***ເມືອງພີນ,*** ສະຖານທີ່ເກົ່າແກ່ ສຳຄັນໃນແຂວງນີ້ມີ ***ພະທາດອີງຮັງ, ເຮືອນຫີນ ...***

ປະຊາຊົນຂອງແຂວງນີ້ ສ່ວນໃຫຍ່ແມ່ນ ຜູ້ໄທ ແລະ ຊົນເຜົ່າລາວເທີງ ຄື ***ບຣູ, ກະເລີງ, ເຢະ, ມາກອງ.*** ວາດຂັບລຳທີ່ນິຍົມ ແລະ ແຜ່ຫລາຍມີ ***ລຳຄອນສະຫວັນ, ລຳຕັ່ງຫວາຍ, ລຳບ້ານຊອກ, ລຳຜູ້ໄທ.***

# 14 ແຂວງສາລະວັນ




ມາດຕາສ່ວນ 1:1.750.000

**ເຄື່ອງໝາຍ**

- ○ ທີ່ວ່າການແຂວງ
- ● ທີ່ວ່າການເມືອງ
- ✈ ສະໜາມບິນ
- -·-·- ເສັ້ນຊາຍແດນປະເທດ
- -·-·- ເສັ້ນຊາຍແດນແຂວງ
- ----- ເສັ້ນຊາຍແດນເມືອງ
- —— ທາງລົດ
- ແມ່ນ້ຳ

| | |
|---|---|
| ເນື້ອທີ່ | 10.385 ກມ$^2$ (ກ່ອນ 1995) |
| ປະຊາກອນ | 237.000 ຄົນ (ກ່ອນ 1995) |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) 60% |
| | ມອນ-ຂະແມ (ລາວເທິງ) 40% |
| ທີ່ວ່າການແຂວງ | ສາລະວັນ |
| ແມ່ນ້ຳສຳຄັນ | ເຊໂດນ, ເຊເສັດ |
| ເຂື່ອນໄຟຟ້າ | ຕາດເສັດ : ສະມັດຖະພາບ 45 Mw |

***ສາລະວັນ*** ເປັນແຂວງໜຶ່ງທີ່ໄດ້ຮັບ ຄວາມເສຍຫາຍໜັກໜ່ວງຈາກໄພສົງຄາມ ເມື່ອຊາວປີກ່ອນ. ເມື່ອສົງຄາມຍຸດຕິລົງ ຊາວສາລະວັນ ສ່ວນໜຶ່ງຈຶ່ງເດີນທາງກັບຄືນມາສ້າງບ້ານ ແປງເຮືອນ, ເວົ້າໄດ້ວ່າ ***ສາລະວັນ*** ເປັນແຂວງໃໝ່. ພື້ນທີ່ທາງທິດຕາເວັນຕົກ ຕາມລ່ອງນ້ຳຂອງຮາບພຽງ ຈອດຕໍ່ໃສ່ພູພຽງ ***ຕະໂອ້ຍ*** ແລະ ພູພຽງ ***ບໍລະເວນ*** ເຊິ່ງເປັນສາຍພູໄຟເກົ່າ ຂອບດ້ວຍສາຍພູຫລວງ ທາງທິດຕາເວັນອອກ. ***ແຂວງສາລະວັນ*** ມີຊື່ສຽງວ່າເປັນເຂດທີ່ມີປ່າດົງດິບ ອຸດົມສົມບູນກວ່າໝູ່ ແລະ ມີສັດປ່າຊະນິດໃຫຍ່ ແລະ ຫາຍາກ ເຊັ່ນ ງົວບາ, ເມີຍ, ໝີ. ເນື່ອງຈາກເຂດພູພຽງເປັນດິນພູໄຟເກົ່າ ແລະ ຢູ່ໃນລະດັບສູງເໜືອ ນ້ຳທະເລເຖິງ 1.000

ກວ່າແມັດ ຈຶ່ງປູກພືດບາງຊະນິດໄດ້ດີກວ່າບ່ອນອື່ນໆ ເຊັ່ນ ກາເຟ, ໝາກແໜ່ງ, ທຸລຽນ.

ໃນປີ 1991 ລັດຖະບານແຫ່ງ ***ສ.ປ.ປ.ລາວ*** ໄດ້ສ້າງເຂື່ອນໄຟຟ້ານໍ້າຕົກ ທີ່ມີສະມັດຖະພາບການຜະລິດ ໃນລະດູຝົນ 45 Mw ໃສ່ ***ເຊເສັດ*** ອັນເປັນສາຂາຂອງ ***ເຊໂດນ.*** ພະລັງງານໄຟຟ້າດັ່ງກ່າວ ສົ່ງຕໍ່ໄປຍັງແຂວງໃກ້ຄຽງ ແລະ ຂາຍເປັນສິນຄ້າຂາອອກ. ***ສາລະວັນ*** ເປັນແດນດິນທີ່ມີທໍາມະຊາດ ພູຜາ ແລະ ນໍ້າຕົກຫລາຍແຫ່ງ. ອາດອັບລໍາ ທີ່ນິຍົມຫລາຍ ມີລໍາສາລະວັນ, ລໍາຕັ່ງຫວາຍ. ບຸນປະເພນີ ມີບຸນປີໃໝ່ ແລະ ບຸນກູ້ເຜືອກ ກູ້ມັນ ຂອງຊົນເຜົ່າ.

24/VII
ຫ້າມຈໍາໜ່າຍ

# 15 ແຂວງເຊກອງ




ມາດຕາສ່ວນ 1:1.750.000

<u>ເຄື່ອງໝາຍ</u>

- ○ ທີ່ວ່າການແຂວງ
- ● ທີ່ວ່າການເມືອງ
- ✈ ສະໜາມບິນ
- ─·─ ເສັ້ນຊາຍແດນປະເທດ
- —·— ເສັ້ນຊາຍແດນແຂວງ
- ----- ເສັ້ນຊາຍແດນເມືອງ
- —— ທາງລົດ
- ═ ແມ່ນ້ຳ

| | |
|---|---|
| ເນື້ອທີ່ | 7.665 ກມ$^2$ (ກ່ອນ 1995) |
| ປະຊາກອນ | 59.000 ຄົນ (ກ່ອນ 1995) |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) 25% |
| | ມອນ-ຂະແມ (ລາວເທິງ) 75% |
| ທີ່ວ່າການແຂວງ | ລະມາມ |
| ແມ່ນ້ຳສຳຄັນ | ເຊກອງ |

***ເຊກອງ*** ເປັນແຂວງຕັ້ງໃຫມ່ ເມື່ອປີ ຄ.ສ. 1985 ເປັນແຂວງນ້ອຍອັນດັບທີສອງ ຮອງຈາກ ***ແຂວງບໍ່ແກ້ວ*** ແລະ ມີຜົນລະເມືອງຫນ້ອຍກວ່າຫມູ່. ແຕ່ກ່ອນເປັນສ່ວນຫນຶ່ງຂອງ ແຂວງ ທີ່ເອີ້ນວ່າ ***ແຂວງຕາເວັນອອກ*** ຊຶ່ງກວມເອົາແຂວງ ***ສາລະວັນ*** ສ່ວນຫນຶ່ງ. ພື້ນທີ່ສ່ວນໃຫຍ່ເປັນພູພຽງ ແລະ ພູສູງ. ພູພຽງ ***ກະເສັງ*** ແລະ ***ຈະວານ*** ເຄີຍເປັນສະຫນາມຮົບ ແລະ ເສັ້ນທາງລຳລຽງຂອງກອງທັບປົດປ່ອຍ, ເສັ້ນທາງ ***ໂຮຈິມິນ*** ຕັດຜ່ານໃນສະໄຫມສົງຄາມກູ້ຊາດ ລະຫວ່າງຊຸມປີ 60-70, ດັ່ງນັ້ນ ຕາມທ້ອງຖິ່ນດິນພູຈຶ່ງເຕັມໄປດ້ວຍຂຸມລະເບີດ ຊາກລົດຖັງ. ບາງບ່ອນຍັງມີລະເບີດທີ່ຍັງບໍ່ແຕກ ເອົາຫົວສັກຝັງດິນຢູ່.

ພູມອາກາດ ໃນເຂດພູພຽງ ຊຸ່ມເຢັນ ແລະ ມີຝົນຝອຍເກືອບຕະຫລອດປີ. ເຂດນີ້ປົກຫຸ້ມດ້ວຍປ່າແປກ, ເນື້ອດິນເຫມາະກັບການປູກກາເຟ. ປ່າໄມ້ໃຫຍ່ ແລະ ດົງດິບ ມີເຜີ້ງຫລາຍ, ແຕ່ລະປີປະຊາຊົນໃນ ***ແຂວງເຊກອງ*** ສາມາດຫານ້ຳເຜີ້ງທຳມະຊາດມາຂາຍເພື່ອສ້າງລາຍຮັບຕື່ມໃຫ້ແກ່ຄອບຄົວ. ດິນຮາບພຽງເພື່ອເຮັດນາປູກເຂົ້າ ບໍ່ພຽງພໍ ປະຊາຊົນສ່ວນ ຫນຶ່ງ ຈຶ່ງເຮັດໄຮ່ຕາມເປີ້ນພູ.

ປະຊາຊົນໃນແຂວງນີ້ ສ່ວນໃຫຍ່ແມ່ນຊົນຊາດລາວເທິງ ຊຶ່ງມີເຜົ່າ ***ອາລັກ, ຕະລຽງ, ລະແວ, ກະເສັງ, ຍ່າເຫີນ ...*** ທີ່ດຳລົງຊີວິດຢູ່ແບບທຳມະຊາດ. ຂໍ້ມູນສະຖິຕິສະແດງວ່າ ອັດຕາຄົນມີເຊື້ອໄຂ້ປ່າໃນແຂວງນີ້ ສູງກວ່າຫມູ່ ຄື 52% ແລະ ອາຍຸໄຂຂອງຄົນໂດຍສະເລ່ຍ ຕ່ຳກວ່າຫມູ່ ຄື 35,5 ປີ ເທົ່ານັ້ນ.

ບຸນປະເພນີທີ່ສຳຄັນ ມີບຸນກິນຄວາຍ ຫລື ***ໂດນລະ*** ທີ່ເຮັດໃນລະຫວ່າງເດືອນສາມ ຫາເດືອນສີ່ເພັງ ທຸກໆສາມປີ, ນອກນີ້ ກໍມີບຸນຮູດເຂົ້າ ຫລື ປີໃຫມ່ ແລະ ສັກເຂົ້າ.

# 16 ແຂວງຈຳປາສັກ



| | |
|---|---|
| ເນື້ອທີ່ | 15,415 ກມ² (ກ່ອນ 1995) |
| ປະຊາກອນ | 477 000 ຄົນ (ກ່ອນ 1995) |
| ຊົນເຜົ່າ | ລາວ-ໄຕ (ລາວລຸ່ມ) 85% |
| | ມອນ-ຂະແມ (ລາວເທິງ) 15% |
| | ທີ່ວ່າການແຂວງ ປາກເຊ |
| ແມ່ນ້ຳສຳຄັນ | ເຊໂດນ, ນ້ຳຂອງ |
| ບູຮານວັດຖຸ | ຜາສາດຫີນວັດພູ |

***ຈຳປາສັກ*** ແມ່ນຫນຶ່ງໃນສອງແຂວງ ທີ່ຢູ່ທາງຝັ່ງຂວາ ຂອງແມ່ນ້ຳຂອງ, ມີປະຊາຊົນຫລາຍເປັນອັນດັບທີສາມ. ***ແຂວງຈຳປາສັກ*** ເປັນດິນແດນແຫ່ງປະຫວັດສາດ ຂອງຊົນຊາດ ***ຂອມ*** ຫລື ຂະເຫມນບູຮານ ຊຶ່ງມີອຳນາດລາມຂຶ້ນມາພາກເຫນືອລະຫວ່າງ ຄິດຕະສະຕະວັດທີ 4-9. ເມື່ອຊົນຊາດຂອມເລີ່ມເສື່ອມອຳນາດລົງ ລະຫວ່າງຄິດຕະສະຕະວັດທີ 10-12, ຊົນຊາດລາວ ທີ່ເຄື່ອນຍ້າຍມາຈາກພາກໃຕ້ຂອງຈີນ ໄດ້ເຕົ້າໂຮມກັນ ແລະ ເຂົ້າຢູ່ຮ່ວມກັບ ***ຊາວຂອມ*** ພາຍຫລັງ ***ເຈົ້າຟ້າງຸ່ມ*** ໃຊ້ກຳລັງທະຫານເຕົ້າໂຮມແຜ່ນດິນ ທີ່ມີຊົນຊາດລາວອາໄສຢູ່ ໃຫ້ເປັນອັນຫນຶ່ງອັນດຽວກັນ, ***ອານາຈັກຈຳປາ***

ຫລື ***ຈຳປາສັກ*** ກໍມີຊື່ເປັນເຂດແຂວງໜຶ່ງ ຂອງ ***ອານາຈັກລ້ານຊ້າງ*** ຈົນມາຮອດສະໄໝ ***ອານາຈັກລ້ານຊ້າງ*** ແຕກແຍກກັນ ໃນຕົ້ນ ສັດຕະວັດທີ 18, ***ຈຳປາສັກ*** ກໍຕົກໄປຢູ່ພາຍໃຕ້ ການປົກຄອງ ຂອງ ***ສະຫຍາມ*** ຄືກັບ ***ວຽງຈັນ*** ແລະ ***ຫລວງພະບາງ.*** ເມື່ອ ***ຝະລັ່ງ*** ເຂົ້າມາເອົາລາວເປັນຫົວ ເມືອງຂຶ້ນ ຈຶ່ງເກີດການຍາດແຍ່ງດິນແດນ ກັບ ***ສະຫຍາມ.*** ແຕ່ນັ້ນມາ ***ຈຳປາສັກ*** ກໍມີ ປະຫວັດສາດ ຄ້າຍຄືກັບ ***ແຂວງໄຊຍະບູລີ*** ຄືຖືກຍົກໃຫ້ເປັນຂອງ ***ສະຫຍາມ*** ລະຍະໜຶ່ງ ແລ້ວກັບມາຢູ່ພາຍໃຕ້ການອາລັກຂາ ຂອງ ***ຝະລັ່ງ*** ຕາມການ ປ່ຽນແປງຂອງເຫດການ.

ພື້ນທີ່ເບື້ອງທິດຕາເວັນຕົກຂອງ ***ແຂວງຈຳປາສັກ*** ເປັນທົ່ງພຽງ ລ່ອງລຽບຕາມສອງຝັ່ງ ແມ່ນ້ຳຂອງ, ທົ່ງນາກວ້າງຂວາງໃນເຂດນີ້ ເຮັດໃຫ້ ***ຈຳປາສັກ*** ເປັນອູ່ເຂົ້າອູ່ປາ ເປັນດິນແດນທີ່ອຸດົມສົມບູນ ກວ່າໝູ່ ໃນ ***ສ.ປ.ປ.ລາວ,*** ພູພຽງ ***ບໍລະເວນ*** ຊຶ່ງມີລະດັບສູງກວ່າ ທະເລ ປະມານ 1.000 ກວ່າແມັດ ເປັນດິນເຖົ່າ ພູໄຟເກົ່າ ເຮັດໃຫ້ ສາມາດປູກໝາກໄມ້ ແລະ ຜັກບາງຢ່າງໄດ້ດີ ເຊັ່ນ ກາເຟ, ໝາກ ສະເອີ່, ມັນຝະລັ່ງ, ກະລໍ່າປີ, ກາລົດ, ຫົວຜັກບົ່ວໃຫຍ່ ...

***ຈຳປາສັກ*** ເປັນແຂວງໃຕ້ສຸດຂອງລາວ ມີເກາະດອນຫລາຍກວ່າໝູ່, ***ເມືອງໂຂງ*** ເປັນເມືອງກາງດອນມີຊື່ໃນບາງເອກະສານບາງສະໄໝວ່າ ເມືອງສີ່ພັນດອນ ແລະສະໄໝຂຶ້ນຕໍ່***ສະຫຍາມ*** ມີຊື່ວ່າ ***ສີທັນດອນ*** ອັນໝາຍເຖິງແຜ່ນດິນທີ່ຢູ່ລະຫວ່າງນໍ້ານັ້ນເອງ. ເຂດຊາຍແດນທາງໃຕ້ ສຸດລົງດ້ວຍແກ້ງໃຫຍ່ ຫລື ***ລີ່ຜີ*** ອັນເປັນແກ້ງທີ່ງົດງາມກວ້າງໃຫຍ່ອັນດັບໜຶ່ງ ໃນອາຊີຕາເວັນອອກສຽງໃຕ້. ແກ້ງນີ້ມີລະຍະນໍ້າໂຕນຕາດ ຍາວຕິດຕໍ່ກັນຫລາຍ ກິໂລແມັດ ລະດັບນໍ້າໂຕນສູງ ນັບແຕ່ດອນໂຂງລົງໄປ 200-300 ແມັດ ສິ່ງສຽງດັງກ້ອງງານ ໄດ້ຍິນກ້ອງໄປໄກ. ນັບເປັນບ່ອນງົດງາມຍິ່ງໃຫຍ່ແຫ່ງໜຶ່ງໃນ ***ປະເທດລາວ.*** ນອກຈາກ ມີທຳມະຊາດຫລາຍຮູບຫລາຍຊົງແລ້ວ ***ແຂວງຈຳປາສັກ*** ຍັງມີຜາສາດຫີນທີ່ເອີ້ນກັນຕິດປາກວ່າ ***ວັດພູຈຳປາສັກ.*** ໃນຕຳນານບູຮານ ***ວັດພູ*** ມີຊື່ວ່າ ***ຜາສາດລິງຄະປະວະຣະຕະ*** ອັນເປັນຊື່ ໃນພາສາ ***ສັນສະກຣິດ*** ຕັ້ງໂດຍເຈົ້າຊີວິດຊົນຊາດຂອມຜູ້ໜຶ່ງ. ທີ່ຜາສາດມີນຳກັນຫລາຍຫລັງຢັ້ງຢາຍແຕ່ຕີນພູ ຂຶ້ນໄປຕາມເປີ້ນພູ ໂດຍມີຂັ້ນໄດຫີນ ປູລາດດ້ວຍຫີນກ້ອນໃຫຍ່ເປັນຂັ້ນໆ ເຊິ່ງກໍ່ດ້ວຍກ້ອນຫີນຕັດຂະໜາດຕ່າງໆນັບແຕ່ເທົ່າກ້ອນດິນຈີ່ ໄປຫາຂະໜາດ 1 ແມັດກ້ອນ. ແຕ່ລະກ້ອນຄວັດເປັນລວດລາຍ ຕາມເລື່ອງຂອງສາສະໜາພາມ ຄືມີຮູບພະເຈົ້າ

ອົງສຳຄັນໃນສາສະໜານີ້ ເຊັ່ນ ***ພະສິວະ, ພະນາຣາຍ, ພະອິດສະນຸ, ນາງຟ້າ*** ຫລື ***ນາງອັບປະສອນ ...*** ນັກປະຫວັດສາດ **ແລະ** ຜູ້ຊ່ຽວຊານດ້ານວັດຖຸບູຮານມີຄວາມເຫັນວ່າ ຜາສາດຫີນຫລັງນີ້ ສ້າງຂຶ້ນໃນລະຫວ່າງ ພ.ສ. 1200 ( ຫລື ຄ.ສ. 700 ) **ແລະ** ມີການເສີມສ້າງຕິດຕໍ່ມາເລື້ອຍໆ ແຕ່ໄດ້ເພພັງຫັກໂຄ່ນລົງ **ແລະ** ຖືກໄຟໄຫມ້, ມາເຖິງ ຄ.ສ. 1989 ລັດຖະບານແຫ່ງ ***ສ.ປ.ປ.ລາວ*** ໄດ້ລົງມືບູລະນະຮັກສາ ໂດຍການຮ່ວມມື ແລະ ຊ່ວຍເຫລືອ **ຈາກ**ອົງການສາກົນ ກັບປະເທດເພື່ອນມິດ.

ບຸນປະເພນີສຳຄັນອັນຫນຶ່ງຂອງແຂວງ **ກໍແມ່ນບຸນ**ໄຫວ້ວັດພູຊຶ່ງຈັດຂຶ້ນໃນມື້ເດືອນສາມເພັງທຸກໆປີ. ໃນໂອກາດນີ້ ປະຊາຊົນຈາກທ້ອງຖິ່ນແຂວງອ້ອມຂ້າງ ຕ່າງກໍຫລັ່ງໄຫລ ມາຮ່ວມບຸນນີ້ ແລະນຳເອົານ້ຳທ່ຽງເມືອກິນ. ນ້ຳນີ້ໄຫລອອກຈາກໜ້າຜາດ້ານຫລັງຫໍໄຫວ້ຊັ້ນເທິງ ໂດຍເຊື່ອວ່ານ້ຳນັ້ນເປັນນ້ຳວິເສດ ສາມາດເຢົາຢາພະຍາດບາງຢ່າງໄດ້. ອາດຂັບລຳ ທີ່ມີຊື່ສຽງ ມີ ***ລຳໂສມ, ລຳສີທັນດອນ.***

ຂົວຂ້າມນ້ຳຂອງລຳດັບທີສອງ ໃນ ສ.ປ.ປ.ລ. ຈະເຊື່ອມຕໍ່ເມືອງປາກເຊ ແຂວງຈຳປາສັກ ໃສ່ກັບຝັ່ງເມືອງເກົ່າ ໂດຍການຊ່ວຍເຫລືອລ້າຂອງລັດຖະບານຍີ່ປຸ່ນ, ສ້າງມາແຕ່ເດືອນຕຸລາປີ 1997 ແລະ ຈະສຳເລັດລົງໃນເດືອນຕຸລາ ປີ 2000 ເປັນຂົວແບບທັນສະໄຫມແຫ່ງນຶ່ງ.

# 17 ແຂວງອັດຕະປື




**ເຄື່ອງໝາຍ** ມາດຕາສ່ວນ 1:1.750.000

| | |
|---|---|
| ○ ທີ່ວ່າການແຂວງ | _._._ ເສັ້ນຊາຍແດນແຂວງ |
| ● ທີ່ວ່າການເມືອງ | ----- ເສັ້ນຊາຍແດນເມືອງ |
| ✈ ສະໜາມບິນ | ——— ທາງລົດ |
| -.-.- ເສັ້ນຊາຍແດນປະເທດ | ແມ່ນ້ຳ |

| | | | |
|---|---|---|---|
| ເນື້ອທີ່ | 10.320 ກມ² (ກ່ອນ 1995) | | |
| ປະຊາກອນ | 83.000 ຄົນ (ກ່ອນ 1995) | | |
| ຊົນເຜົ່າ | ລາວ-ໄຕ | (ລາວລຸ່ມ) | 40% |
| | ມອນ-ຂະແມ | (ລາວເທິງ) | 60% |

ທີ່ວ່າການແຂວງ ເມືອງໄຊເຊດຖາ
ແມ່ນ້ຳສຳຄັນ ເຊກອງ, ເຊກະໜານ

***ອັດຕະປື*** ເປັນແຂວງໃຕ້ສຸດ ທາງທິດຕາເວັນອອກຂອງ ***ສ.ປ.ປ.ລາວ,*** ມີຊາຍແດນ ຕິດກັບ ***ກຳປູເຈຍ*** ແລະ ***ຫວຽດນາມ.*** ພື້ນທີ່ສ່ວນໃຫຍ່ເປັນທົ່ງ ແລະ ພູພຽງ ເຊັ່ນ ***ພູພຽງລະແວ*** ທີ່ປົກຫຸ້ມດ້ວຍປ່າໃຫຍ່ ດົງດິບ, ຖືວ່າເປັນແຂວງໜຶ່ງ ທີ່ມີສັດປ່າຂະໜາດໃຫຍ່ ອາໄສຢູ່ ເຊັ່ນ ຊ້າງ, ເມີຍ, ເສືອ, ໝີ, ງົວບາ, ຟານ, ກວາງ ເປັນຕົ້ນ. ຢູ່ໃນນ້ຳ ***ເຊກອງ*** ທີ່ເປັນສາຂາແມ່ນ້ຳຂອງ ມີ***ປາຂ່າ*** ອາໄສຢູ່. ປະຊາຊົນໃນແຂວງ ***ອັດຕະປື*** ມີຄວາມຊຳນານໃນເລື່ອງ ປັ່ນບ້າງຮ່ອນຄຳ ໄວ້ແລກປ່ຽນ ຈົນມີຄຳຜະຫຍາເວົ້າແຜ່ຫລາຍ ໃນສະໄໝກ່ອນວ່າ ***ອັດຕະປືປິ້ງຂາຍຄຳແລກໄກ່ ສາລະວັນຂີ້ໄຮ້ ຂາຍຊ້າງແລກກະບອງ.*** ຍ້ອນເປັນແຂວງສຸດຊາຍແດນ ***ອັດຕະປື*** ຈຶ່ງມີບົດບາດສຳຄັນໃນປະຫວັດສາດ ຄືໃນສະໄໝທີ່ ***ເຈົ້າຟ້າງຸ່ມ*** ຖືກເອົາ ລ່ອງເຮືອມາແຕ່ ***ເມືອຊວາ*** ກໍໄດ້ມາຕົກລ້າງຢູ່ໃນທ້ອງຖິ່ນນີ້ ເຊິ່ງເວລານັ້ນ ຢູ່ໃນອິດທິພົນຂອງ ***ຂະເໝນ. ເຈົ້າໄຊຍະເຊດຖາ*** ເອງ ກໍໄດ້ມາສ້ຽງຊີວິດຢູ່ໃນ ***ແຂວງອັດຕະປື*** ເມື່ອຍົກກອງທັບມາຕີ ***ເມືອງອົງການ (ອັງກໍ).*** ປະຊາຊົນຊາວເມືອງ ໄດ້ສ້າງທາດໃສ່ດູກ

ຂອງພະອົງໄວ້ ແລະ ເອີ້ນວ່າ ***ທາດພະໄຊ*** ຈົນເທົ້າທຸກວັນນີ້. ໃນສະໄຫມສົງຄາມກູ້ຊາດ ***ອັດຕະປື*** ເປັນແຂວງຫນຶ່ງ ທີ່ໄດ້ຮັບຄວາມເສຍຫາຍຢ່າງຫນັກຫນ່ວງ ຈາກການຖິ້ມລະເບີດ.

ປະຊາຊົນໃນແຂວງ ອັດຕະປື ສ່ວນໃຫຍ່ ເປັນຊົນເຜົ່າລາວເທິງ ຄື ເຜົ່າ ***ລະແວ, ຈຣຸງ, ອາລັກ, ຍ່າເຫີນ, ກະເສງ, ສະດາງ*** ທີ່ຍັງດຳລົງຊີວິດຕາມທຳມະຊາດ ແລະ ຮັກສາປະເພນີ ບາງອັນໄວ້ ເຊັ່ນ ຮູບຊົງເຮືອນ ການຈັກສານ, ພາສາ, ຮິດຄອງ, ການແຕ່ງດອງ, ການເປົາຢາຄົນເຈັບ ດ້ວຍການຂ້າສັດ ເຊັ່ນ ໄກ່, ຫມູ, ຄວາຍ ລ້ຽງຜີ. ຊົນເຜົ່າລາວເທິງໃນເຂດນີ້ ກໍຄືໃນແຂວງອື່ນ ມີຄວາມຊຳນານ ໃນເລື່ອງຈັກສານ ເຮັດເຄື່ອງມືໂຫ່ເນື້ອ ຫາປາ ເຄື່ອງໃຊ້ໃນການປູກຝັງ ແລະ ເຄື່ອງໃຊ້ໃນຄົວເຮືອນເອງ ເຊັ່ນ ຈຳພວກ ເປ້, ກະຕິບ, ກະຢັງ, ກະບຸງກະຕ່າ ດ້ວຍຫວາຍ. ຊົນເຜົ່ານີ້ ຮູ້ຈັກຫລໍ່ຄ້ອງ ຕີຄ້ອງ ດ້ວຍໂລຫະປະສົມ ແລະ ເຮັດໄຫດິນໃສ່ເຫລົ້າ. ແມ່ຍິງບາງຊົນເຜົ່າຕ່ຳຫູກດ້ວຍກີ່ແອວ ເຮັດເຄື່ອງນຸ່ງຫົ່ມ ເຊັ່ນ ***ກະຕ່ຽວ ຜ້າຫົ່ມ ສິ້ນ*** ເປັນຕົ້ນ ບັນຫາການເຈັບປ່ວຍດ້ວຍໄຂ້ປ່າ ຍັງຫນັກຫນ່ວງ. ໃນກໍລະນີມີຄົນເສຍຊີວິດຫລາຍ ເຊື່ອວ່າເປັນຍ້ອນຜີ ປະຊາຊົນຈະພາກັບອົບພະຍົບໄປຊອກບ່ອນຕັ້ງບ້ານໃຫມ່.

# 18 ເຂດພິເສດ ໄຊສົມບູນ




ປະຊາກອນ 54.112 ຄົນ

**<u>ເຄື່ອງໝາຍ</u>**

O ທີ່ວ່າການແຂວງ

● ທີ່ວ່າການເມືອງ

✈ ສະໜາມບິນ

—·—·— ເສັ້ນຊາຍແດນປະເທດ

—·—·— ເສັ້ນຊາຍແດນແຂວງ

- - - - - ເສັ້ນຊາຍແດນເມືອງ

———— ທາງລົດ

ແມ່ນ້ຳ

**ມາດຕາສ່ວນ 1 : 1.500.000**

# ກ

**ກ** ພະຍັນຊະນະຕົວທຳອິດ ເອີ້ນວ່າຕົວກໍ, ຖືກຈັດໄວ້ໃນຫມວດອັກສອນກາງ ແລະ ໃຊ້ເປັນຕົວສະກົດໄດ້ ເຊັ່ນ : ມັກ, ປາກ, ໂລກ ...

**ກະ** 1. ຄາດຫມາຍ, ຄະເນ, ນັບຢູ່ໃນໃຈ ເຊັ່ນ : ກະວ່າຄືນຕອນນີ້ ກວ້າງ ຊາວຕະລາງແມັດ.

2. ຮອຍຈ້ຳດຳໆ ຄືຮອຍມຶກຕາມຜິວຫນັງ ຂອງຜູ້ເຖົ້າ.

3. ພະຍາງຫນ້າ ຂອງຫລາຍໆຄຳ ໃຊ້ໄວ້ ເພື່ອໃຫ້ອອກສຽງສະບາຍ ເຊັ່ນ : ກະຕ່າ, ກະປູ,ກະປ໋ອງ.

**ກະຈະ** ງາມ,ຂາວເດັ່ນ,ແຈ່ມແຈ້ງ, ມັກໃຊ້ປະກອບຄຳວ່າຂາວ ເຊັ່ນ : ຝ້າຍຂາວກະຈະເຕັມສວນ.

**ກະຈາ** ລັກສະນະບໍ່ເຕັມອັ້ນ, ບໍ່ດີເລີຍ ຫລື ເຄິ່ງໆກາງໆ ເຊັ່ນ ຫມາກພ້າວທີ່ບໍ່ທັນຫ້າວ ແຕ່ກໍບໍ່ອ່ອນ ເອີ້ນວ່າ ຫມາກພ້າວ ກະຈາ ລັກສະນະທີ່ບໍ່ເກັ່ງໃນວິຊາໃດຫນຶ່ງ ພຽງແຕ່ຮູ້ເລັກໆ ນ້ອຍໆ ເອີ້ນວ່າ ພໍກະຈາ.

**ກະແຈະ** 1. ຝຸ່ນຫອມຫລືແປ້ງຫອມ ເຮັດຈາກຕົ້ນຈັນຫອມ ຫລື ຂະຫມີ້ນ ຊຶ່ງຄົນສະໄຫມກ່ອນ ໃຊ້ທາຕົນຕົວ.

2. ຊື່ແຂວງຫນຶ່ງຂອງ ກຳພູຊາ ຫລື ກຳປູເຈຍ ຊຶ່ງຕິດຊາຍແດນລາວທາງພາກໃຕ້.

**ກະແຈ** ເຄື່ອງມືສໍາລັບອັດ ປະຕູ ຫລື ຫີບ, ແບ່ງອອກເປັນສອງພາກສ່ວນ ຄື ໜ່ວຍກະແຈ ແລະ ລູກກະແຈ, ກຸນແຈກໍວ່າ; ເຄື່ອງມືໃຊ້ໃນການສ້ອມແປງ.



ກະແຈ

**ກະເຈົ້າ** ພືດຊະນິດໜຶ່ງ ເອີ້ນປໍກະເຈົ້າ, ເປືອກໃຊ້ເຮັດເຊືອກ ຫລື ເຮັດໄຫ່ເຂົ້າ.

**ກະຈົກ** ແກ້ວເປັນແຜ່ນໃຊ້ສໍາລັບແຍງເງົາ;ແວ່ນແຍງກໍວ່າ.

**ກະຈັງ** ຊື່ລາຍລາວແບບໜຶ່ງ ຊຶ່ງເປັນສິລະປະບູຮານ ໃຊ້ປະດັບຕາມວັດ ແລະ ຫໍໂຮງ, ເອີ້ນອີກຢ່າງໜຶ່ງວ່າລາຍຕາອ້ອຍເທດ.



ກະຈັງ

**ກະຈາຍ** 1. ເຮັດໃຫ້ແຜ່ອອກໄປທົ່ວ ເຊັ່ນ ສະຖານີວິທະຍຸກະຈາຍສຽງໄປທົ່ວປະເທດ; ກະຈາຍກໍາລັງ ແມ່ນສົ່ງກໍາລັງພົນໃຫ້ຈ່າຍອອກ ໄປຕາມພື້ນທີ່ ອັນກວ້າງຂວາງ.

2. ຫວ້ານຊະນິດໜຶ່ງ ທີ່ມີທາດເບື່ອ ເອີ້ນວ່າ ຫວ້ານກະຈາຍ.

**ກະຈູ້ດ** ຕຸ້ມໃສ່ອ່ຽມ ຮູບຊົງຄືໝັ້ຫນຶ້ງ ມີງາຫລືຝາ ຢູ່ດ້ານ ລຸ່ມ.



ກະຈູດ

**ກະຈອນ** ເຄື່ອງປະດັບຫູ ເຮັດດ້ວຍເງິນຄໍາ, ທອງນາກ ຫລືປະລາສະຕິກ, ມີຫລາຍຊະນິດ ເຊັ່ນ: ກະຈອນຈູມ, ກະຈອນຍອຍ ເປັນຕົ້ນ.



ກະຈອນ

**ກະຈ້ອນ** ສັດສີ່ຕີນຈໍາພວກໄຕ່ໄມ້ ມີຂົນສີຮູຍ (ເຫລືອງປົນແດງ) ໂຕຂະໜາດກະຮອກ, ກະແຕ.

**ກະຈັບ** 1. ພືດລອຍນໍ້າ ຕາມໜອງ, ໝາກກິນໄດ້ ເອີ້ນວ່າ ໝາກຈັບ ຊະນິດໜຶ່ງມີໜາມແຂງ ແລະ ແຫລມ ເພິ່ນຈຶ່ງເອີ້ນລວດໜາມ ທີ່ໃຊ້ລ້ອມຮົ້ວ ວ່າ ໜາມໝາກຈັບ.

2. ເຄື່ອງປ້ອງກັນອະໄວຍະວະເພດຊາຍ ຂອງນັກກິລາຕີມວຍ.

**ກະຈັບປີ່** ເຄື່ອງດົນຕີປະເພດ ດີດ ມີສີ່ສາຍ ບູຮານເອີ້ນວ່າຊຸງ.



ກະຈັບປີ່

**ກະຈັບປີ້ງ** ເຄື່ອງປົກບັງ ອະໄວຍະວະເພດຍິງ ສໍາລັບເດັກນ້ອຍແມ່ຍິງ ໃຊ້ຍາມບໍ່ນຸ່ງເຄື່ອງຫຸ້ມກາຍ ເຮັດດ້ວຍເງິນ.

**ກະໂຈມ** ເຄື່ອງສຸບຫົວ ຂອງພະເຈົ້າແຜ່ນດິນ ຫລື ຕົວລະຄອນໃນເທບນິຍາຍ, ຍອດກະໂຈມສ້ວຍແຫລມ ປະດັບດ້ວຍ ແກ້ວມະນີຮຸ່ງເຫລື້ອມ, ຊະດາ ຫລື ມຸງກຸດ ກໍວ່າ.

**ກະໂຈມໄຟ** ຫລັກ ຫລື ຫໍສູງທີ່ມີແສງໄຟ ຕາມທ່າເຮືອ ເພື່ອໃຫ້ນັກເດີນເຮືອ ສັງເກດທິດທາງ ແລະ ຮູ້ຈັກວ່າແຄມຝັ່ງຢູ່ດ້ານໃດ

**ກະຈຽວ** ພືດແນວຫນຶ່ງ ຈໍາພວກຫວ້ານ, ດອກເປັນຊັ້ນ ສີຂາວ-ແດງ ແລະ ກິນໄດ້.

**ກະສາ** ນົກຊະນິດຫນຶ່ງ ຄືນົກຍາງ ແຕ່ໂຕໃຫຍ່ກວ່າ ມັກຫາກິນຕາມແຄມຫນອງ.



ນົກກະສາ

**ກະສິກຳ** ການປູກຝັງ ຢູ່ຕາມໄຮ່ສວນ ແລະນາ, ການລ້ຽງສັດນ້ຳ ແລະ ສັດບົກ. ຜູ້ທຳມາຫາກິນດ້ານນີ້ ເອີ້ນວ່າ *ກະສິກອນ* ຜູ້ເຮັດກະສິກຳ ຫລືຊາວໄຮ່ ຊາວນາ ທີ່ເຮັດການປູກຝັງ ລ້ຽງສັດເປັນອາຊີບ.

**ກະແສ** 1. ການເຄື່ອນໄຫວ ຫລືໄຫລໄປເປັນສາຍ ຫລື ເປັນຂະບວນ ເຊັ່ນ : *ກະແສນ້ຳ*, *ກະແສໄຟຟ້າ*, *ກະແສມະນຸດ*.

2. ຊື່ຫນອງໃຫຍ່ ຢູ່ພາກໃຕ້ຂອງປະເທດຈີນ ຊຶ່ງປະຫວັດສາດລາວເອີ້ນວ່າ *ຫນອງກະແສ* ຊາວຈີນເອີ້ນວ່າ *ຕາລີຟູ*.

**ກະສວຍ** ເຄື່ອງໃສ່ຫລອດເສັ້ນຝ້າຍ ສຳລັບຕຳຫູກ ຮູບຊົງ ຄືເຮືອ.



ກະສວຍ

**ກະສັດ** ເຈົ້າຊີວິດ, ຜູ້ຄອບຄອງແຜ່ນດິນ ຫລື ຜູ້ມີດິນຫລາຍ ຢູ່ໃນການຄຸ້ມຄອງ.

**ກະເສດ** 1. ຜັກແນວຫນຶ່ງເກີດຢູ່ນ້ຳ ເປັນເຄືອ ມີປອດ ສີຂາວຕິດຢູ່ນຳເຄືອ.

2. ທົ່ງນາ,ທີ່ດິນ, ດິນທີ່ປູກພືດໃສ່, ເຂດແດນ, *ກະເສດສາດ* ວິຊາວ່າດ້ວຍ ການປູກຫວ່ານ ແລະ ລ້ຽງສັດ, ຄວາມຮູ້ວ່າດ້ວຍການທຳໃຫ້ເກີດຜົນຈາກດິນ.

**ກະສຸນ** ລູກປືນ ມີຫລາຍຂະຫນາດ ໃຊ້ຍິງໂດຍປືນນ້ອຍ ແລະປືນໃຫຍ່.



ກະສຸນ

**ກະສຽນ** ພົ້ນເຂດ, ຫມົດສັຽງ, ເລີຍໄປແລ້ວ; *ກະສຽນອາຍຸ* ພົ້ນເຂດອາຍຸເຮັດການ ຕາມກົດຫມາຍອະນຸຍາດ; ຜູ້ມີອາຍຸກາຍ 18 ປີຂຶ້ນໄປ.

**ກະຊະ** ໄມ້ໄຜ່ຊະນິດຫນຶ່ງ ເກີດຕາມຕີນພູ ແລະ ແຄມຫ້ວຍນາ ລຳຫນາ ປ້ອງນ້ອຍ.

**ກະແຊ** ວາດຟ້ອນແບບຫນຶ່ງ ຂອງຊາວລາວພາກເຫນືອ ເອີ້ນວ່າ ຟ້ອນກະແຊ.

**ກະໂຊ້** 1. ເຄື່ອງໃຊ້ສານດ້ວຍໄມ້ໄຜ່ ມີສອງຢ່າງ ຄື: *ກະໂຊ້ສະນ້ຳ* ຮູບຍາວ ມີດ້າມຈັບ. *ກະໂຊ້ກວຽນ* ສຳລັບປູພື້ນກວຽນ ເພື່ອຮອງສິ່ງຂອງ.



ກະໂຊ້

2. ຊີ່ແມງຕົວນ້ອຍ ຢູ່ໃນນ້ຳ ຮູບຄືກະໂຊ້ສະນ້ຳ.

**ກະຈັ໋ວ** ພາຊະນະຄ້າຍຄືຂ້ອງ ສຳລັບຂັງປາ ແຊ່ໄວ້ໃນນ້ຳ ເຮັດດ້ວຍໄມ້ປ່ອງ.



ກະຊັງ

**ກະຊວງ** ສະຖານທີ່ເຮັດວຽກຂອງລັດຖະບານ ຈັດແບ່ງຕາມໜ້າວຽກ ໂດຍມີ ລັດຖະມົນຕີເປັນຫົວໜ້າ ເຊັ່ນ *ກະຊວງ ສຶກສາ* ເປັນຕົ້ນ.

**ກະຊອນ** ແມງແນວໜຶ່ງ ໝັ້ນຢູ່ຕາມດິນ ຕົວນ້ອຍໆ ຂາໜ້າມີກ້າມໃຫຍ່ ສຳລັບຄວັດທາງ, ຈີ່ຊອນ ກໍວ່າ.

**ກະແຍງ** 1. ຊື່ປາແນວໜຶ່ງ ບໍ່ມີເກັດ ຕົວນ້ອຍ ມີງ່ຽງຢູ່ແຄມຫູ ແລະ ສັນຫລັງ, ຕົວອ່າວໃຫຍ່ເອີ້ນ *ກະແຍງໂຕ.*

2. ຊື່ຜັກແນວໜຶ່ງ ກິນຍອດ ເປັນກໍນ້ອຍໆ ເກີດຢູ່ຕາມໄຮ່ນາ ຕົ້ນລະດູຝົນ ໃຊ້ປຸງລົດອາຫານ ເຊັ່ນ ແກງ ແລະ ໝົກ ເປັນຕົ້ນ.

**ກະຍອມ** ຕົ້ນໄມ້ປ່າຂະໜາດໃຫຍ່ ແກ່ນແຂງຄືໄມ້ແຄນ ດອກເປັນພົ້ວສີຂາວ ກິ່ນຫອມ ເປັນດອກໃນຕົ້ນເດືອນ 3 ຫາ ເດືອນ 4 ລາວ.

**ກະດໍ** ສ່ວນທີ່ພົ້ນອອກສັ້ນໆນ້ອຍໆ, ເດືອຍທີ່ຕັ້ງຈັບ ສຳລັບມີແນວສຸບໃສ່ ເຊັ່ນ ໃນເຄື່ອງໂມ້ ເປັນຕົ້ນ.

**ກະດູກ** ສ່ວນແຂງ ແລະ ແໜ້ນໜາ ທີ່ປະກອບເປັນໂຄງຮ່າງຂອງຕົນຕົວສັດ ທີ່ມີສັນຫລັງ ແລະ

ຄົນ, ດູກ ກໍວ່າ, ກະດູກ ມີຫຼາຍ ປະເພດ ເຊັ່ນ : *ດູກສັນ* ຄືດູກ ສັນຫລັງ, *ດູກແປ* ຄືດູກເອື້ອງ, *ດູກຍາວ* ຄືດູກຂາແຂນ ເປັນຕົ້ນ, ນອກຈາກເປັນສິ່ງຄ້ຳຊູຮ່າງຄີງ ແລ້ວ ຍັງມີຄວາມສຳຄັນຕໍ່ການ ຜະລິດເມັດເລືອດແດງອີກ, ກະ ດູກຍາວ ມີໄຂມັນເຫລືອງ ແລະ ອອກປອງແດງ.



ກະດູກ

**ກະດ້າງ** 1. ແຂງ, ຂັດແຂງ, ບໍ່ອ່ອນນ້ອມ.

2. ຊື່ເຫັດແບບໜຶ່ງ ເກີດຕາມ ຂອນ ເມື່ອຖືກແດດຈົນແຫ້ງ ເປັນ ສີແດງຊ້ຳ.

**ກະດິງ** 1. ເຄື່ອງອຸ່ນໃຫ້ມີສຽງ ດັງ ເພື່ອສັນຍານໃຫ້ໄດ້ຍິນ ເຮັດ ດ້ວຍໂລຫະ ມີລູກຟັດຢູ່ທາງໃນ ສຳລັບແຂວນຄໍສັດ ຫລື ແຂວນ ຕາມໂງ່ສົມ ເປັນຕົ້ນ.



ກະດິງ

2. ຊື່ແມ່ນ້ຳສາຍໜຶ່ງ ໄຫລຕົກ ໃສ່ແມ່ນ້ຳຂອງ ທີ່ໃຕ້ *ເມືອງປາກ ກະດິງ* ມີຊື່ວ່າ *ຢູຣີກາກາຣີນ* ອ້າມບ່ອນປາກນ້ຳ.

24/VII
ห้ามจำหน่าย

**ກະດົ້ງ** ພາຊະນະສານດ້ວຍໄມ້ໄຜ່ ຮູບແບນ ໃຊ້ຟັດເຂົ້າ.



ກະດົ້ງ

**ກະໂດງ** ເສົາສູງທີ່ຕັ້ງຢູ່ເຮືອສະເພົາ ສຳລັບຜູກແຜ່ນຜ້າ ເຮັດເປັນໃບໃຫ້ລົມພັດ ເພື່ອໃຫ້ເຮືອແລ່ນໄປຕາມກຳລັງລົມ.

**ກະດາດ** ເຈ້ຍ, ຂອງເປັນແຜ່ນບາງໆ ສຳລັບຂຽນ ຫລື ແຕ້ມຮູບ, *ກະດາດແກ້ວ* ເຈ້ຍບາງ ແລະໃສ; *ກະດາດຊາຍ* ເຈ້ຍຊາ ທີ່ມີເມັດດິນຊາຍຕິດຢູ່ ເພື່ອຂັດຖູໄມ້ໃຫ້ກ້ຽງ.

**ກະດັນ** ຕົ້ນໄມ້ແນວຫນຶ່ງ ໃບນ້ອຍຍາວ ສົ້ມ ມັກເກີດຕາມແຄມນ້ຳ, ຊຶ້ນ ຫລື ບອນຫມາກ ໄມ້ທີ່ເປັນກ້ອນແຂງ; *ກະດັນຂາ* ກ້ອນຊຶ້ນແຂງ ທີ່ເປັນຢູ່ ແອບແອຂາ ຫລື ກົກຂາ.

**ກະດັນງາ** ຕົ້ນໄມ້ແນວຫນຶ່ງ ດອກເປັນກາບນ້ອຍ ມີສາມກາບ ສີເຫລືອງ ກິ່ນຫອມ ມີ 2 ແນວຄື *ກະດັນງາບ້ານ* ແລະ *ກະດັນງາປ່າ*.

**ກະດານ** ແຜ່ນແປ້ນ, ແຜ່ນຫີນ ຫລື ຫີນສຳລັບໃຊ້ຂຽນຫນັງສື; *ກະດານດຳ* ແຜ່ນແປ້ນຂະຫນາດໃຫຍ່ ທາສີດຳ ສຳລັບໃຊ້ໃນຫ້ອງຮຽນ.

**ກະໂດນ** ໄມ້ປ່າຈຳພວກຫນຶ່ງ ໃບ ແລະ ເປືອກຝາດ ໃບອ່ອນ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ